# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

21-24 ສິງຫາ 2022
ປີທີ 11
ສະບັບທີ 869


## ປະທານສະພາແຫ່ງຊາດ ພົບປະທາງໄກກັບປະທານສະພາຜູ້ແທນປະຊາຊົນ ແຫ່ງ ສ.ເບລາຣຸດ

(ສພຊ) ໃນຕອນບ່າຍຂອງວັນທີ 19 ສິງຫາ 2022, ທີ່ສະພາແຫ່ງຊາດ, ໄດ້ມີການພົບປະໂດຍຜ່ານລະບົບວີດີໂອແບບທາງໄກ ລະຫວ່າງ ພະນະທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ແລະ ພະນະທ່ານ ວຽາດີເມຽ ອັງເດຼເຊັນໂກ ປະທານສະພາຜູ້ແທນປະຊາຊົນ ແຫ່ງ ສ.ເບລາຣຸດ ໂດຍມີທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ ທັງເປັນປະທານຄະນະມິດຕະພາບລັດຖະສະພາລາວ-ເບລາຣຸດ, ທ່ານ ປອ. ລິນຄຳ ດວງສະຫວັນ ປະທານກຳມາທິການເຕັກໂນໂລຊີ ແລະ ສິ່ງແວດລ້ອມ ສະພາແຫ່ງຊາດລາວ, ທ່ານ ບຸນເຫລືອ ພັນດານຸວົງ ຮອງລັດຖະມົນຕີກະຊວງການຕ່າງປະເທດ ແລະ ພາກສ່ວນກ່ຽວຂ້ອງຂອງທັງສອງຝ່າຍ ເຂົ້າຮ່ວມຈຳນວນໜຶ່ງ.





ໃນການພົບປະຄັ້ງນີ້, ປະທານສະພາແຫ່ງຊາດລາວ ໄດ້ສະແດງຄວາມປິຕິຍິນດີ ແລະ ພາກພູມໃຈທີ່ໄດ້ມີໂອກາດພົບປະກັບພະນະທ່ານ ວຽາດີເມຽ ອັງເດຼເຊັນໂກ ພ້ອມດ້ວຍຄະນະ ເຊິ່ງເປັນການພົບປະກັນຄັ້ງທຳອິດ ໃນຖານະເປັນປະທານສະພາແຫ່ງຊາດລາວ ແລະ ທ່ານປະທານສະພາຜູ້ແທນປະຊາຊົນ ສ.ເບລາຣຸດ ໄດ້ສະແດງຄວາມຂອບໃຈເປັນຢ່າງສູງ ທີ່ຝ່າຍລາວໄດ້ມີແນວຄິດລິເລີ່ມຈັດການພົບປະໃນຄັ້ງນີ້. ສອງຝ່າຍໄດ້ຕີລາຄາສູງຕໍ່ການພົວພັນຮ່ວມມື ລະຫວ່າງສອງປະເທດລາວ-ສ.ເບລາຣຸດ ນັບແຕ່ສ້າງຕັ້ງສາຍພົວພັນການທູດຮ່ວມກັນໃນວັນທີ 7 ທັນວາ 1994 ໄດ້ຮັບການເສີມຂະຫຍາຍຢ່າງຕໍ່ເນື່ອງ ເຊິ່ງສະແດງອອກສອງປະເທດ ໄດ້ມີການແລກປ່ຽນຄະນະຜູ້ແທນຂັ້ນສູງຂອງທັງສອງປະເທດ ໂດຍພະນະທ່ານ ຈູມມະລີ ໄຊຍະສອນ ອາດີດປະທານປະເທດແຫ່ງ ສປປລາວ ໄດ້ຢ້ຽມຢາມ ສ.ເບລາຣຸດ ໃນເດືອນກໍລະກົດ ປີ 2013 ແລະ ປະທານສະພາແຫ່ງຊາດລາວ ຊຸດທີ VIII ໄດ້ຢ້ຽມຢາມ ທີ່ ສ.ເບລາຣຸດ ໃນເດືອນເມສາ ປີ 2014 ແລະ ໄດ້ລົງນາມຮ່ວມກັນໃນບົດບັນທຶກວ່າດ້ວຍການຮ່ວມມື ລະຫວ່າງ

ອ່ານຕໍ່ໜ້າ 2

## ປະເທດຊາດຄືສູງສຸດ

ໂດຍ: ທິດດີ

ພາຍຫລັງ ໜັງສືພິມເຮົາລົງພິມບົດໃນຫົວຂໍ້ "ບຸນຄຸນແຜ່ນດິນຕ້ອງທົດແທນ" ໄດ້ມີເພື່ອນຜູ້ອ່ານຫລາຍທ່ານສົ່ງຄຳເຫັນມາສົນທະນາແລກປ່ຽນ; ບາງທ່ານກໍໄດ້ພົບປະຜູ້ຂຽນ ເພື່ອສະແດງຄຳຄິດເຫັນຕໍ່ຫົວບົດທີ່ຜູ້ຂຽນຕັ້ງຂຶ້ນເຊັ່ນວ່າ: ຈະເຮັດແນວໃດເພື່ອຈະດຶງກ້ອນເງິນຕາຕ່າງປະເທດເຂົ້າສູ່ລະບົບໃຫ້ໄດ້ຫລາຍເທົ່າທີ່ຈະສາມາດເຮັດໃດ້?

ພວກເພິ່ນຕັ້ງບັນຫາເລື່ອງການທີ່ນຳເງິນຕາໄປຝາກທະນາຄານຕ່າງປະເທດນັ້ນ ຖືເປັນສິດທີ່ເພິ່ງເຮັດໄດ້-ທຳໄດ້ ຫລາຍປະເທດໃນໂລກກໍມີສ່ວນບຸກຄົນນຳເງິນທີ່ຊອກຫາມາໄດ້ນຳໄປຝາກທະນາຄານຕ່າງປະເທດ ເຊິ່ງຖືເປັນເລື່ອງປົກກະຕິ. ແຕ່ເຫດຜົນນັ້ນກໍມີຫລາຍຢ່າງທ້າທາຍທີ່ສຸດຄືຊິແມ່ນຄວາມເຊື່ອໝັ້ນວ່າເງິນກ້ອນນັ້ນຈະບໍ່ສູນຫາຍໄປ.

ແລ້ວຄົນລາວເຮົາມີບໍ? ທີ່ນຳເງິນໄປຝາກທະນາຄານຕ່າງປະເທດ.... ແລ້ວຊິເຮັດແນວໃດເພື່ອໃຫ້ເພິ່ນນຳເງິນມາຝາກທະນາຄານພາຍໃນປະເທດ ເພື່ອຈະໄດ້ຊ່ວຍປະເທດ

ອ່ານຕໍ່ໜ້າ 2

## ເຝິກອົບຮົມຍົກສູງຂີດຄວາມສາມາດ ດ້ານທັກສະຕ່າງໆ ໃຫ້ ສສຊ ຈາກ 10 ເຂດເລືອກຕັ້ງ



(ສພຊ) ກອງປະຊຸມເຝິກອົບຮົມການຍົກສູງຂີດຄວາມສາມາດດ້ານທັກສະການຊັກຖາມ, ປະກອບຄຳເຫັນ, ທັກສະ, ການລົງພົບປະຜູ້ມີສິດເລືອກຕັ້ງ, ເປັນການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ການຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ

ອ່ານຕໍ່ໜ້າ 2

## ຍົກລະດັບການຄົ້ນຄວ້າ, ວິເຄາະ, ວິໄຈ ເນື້ອໃນຂອງຮ່າງກົດໝາຍ



(ສພຊ) ໃນລະຫວ່າງວັນທີ 16-17 ສິງຫາຜ່ານມາ, ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ ໄດ້ມີກອງປະຊຸມສຳມະນາຍົກລະດັບກ່ຽວກັບການຄົ້ນຄວ້າ, ວິເຄາະ ເນື້ອໃນຂອງຮ່າງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃຫ້ພະນັກງານ-ລັດຖະກອນ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນ

ອ່ານຕໍ່ໜ້າ 3

## ຄະນະຫ້ອງການຄຸ້ມຄອງຕະຫລາດພະລັງງານ ຂອງສິງກະໂປ ພົບປະ ແລະ ເຮັດວຽກຮ່ວມກັບ ກສຕສ



ໜ້າ 3

## ກວທສ ສຳເລັດການຕິດຕາມກວດກາ ຂົງເຂດສາທາລະນະສຸກ



ໜ້າ 3

## ສຳເລັດການເຂົ້າຮ່ວມກອງປະຊຸມ ທີ່ຣາຊະອານາຈັກກຳປູເຈຍ

(ສພຊ) ລະຫວ່າງວັນທີ 10-11 ສິງຫາຜ່ານມາ, ຄະນະຜູ້ແທນສະພາແຫ່ງຊາດ (ສພຊ) ນຳໂດຍທ່ານ ພອນສານ ວິໄລເມັ້ງ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ, ຮອງປະທານຄະນະບໍລິຫານງານສູນກາງສະຫະພັນ

ອ່ານຕໍ່ໜ້າ 3





ໜ້າ 4



ໜ້າ 4



ໜ້າ 4



ໜ້າ 5



ໜ້າ 5



ໜ້າ 5

## ປະທານ...

ສະພາແຫ່ງຊາດລາວ ແລະ ສະພາຜູ້ແທນປະຊາຊົນ ສ.ເບລາຣຸດ, ສອງຝ່າຍຍັງໄດ້ຮ່ວມມື ແລະ ສະໜັບສະໜູນ ເຊິ່ງກັນແລະກັນ ຢູ່ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ.

ໂອກາດນີ້, ສອງຝ່າຍໄດ້ປຶກສາຫາລືກ່ຽວກັບການພົວພັນຮ່ວມມືຂອງສອງປະເທດ ກໍຄື ສອງອົງການນິຕິບັນຍັດໃນຕໍ່ໜ້າ ເຊິ່ງສອງຝ່າຍຈະໄດ້ພ້ອມກັນຊຸກຍູ້ການຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ ແລະ ຂໍ້ຕົກລົງຕ່າງໆ ທີ່ສອງລັດຖະບານ ໄດ້ລົງນາມຮ່ວມກັນ ໃຫ້ມີປະສິດທິຜົນສູງ ແລະ ນຳເອົາຜົນປະໂຫຍດມາສູ່ປະຊາຊົນຢ່າງແທ້ຈິງ; ພ້ອມກັນນີ້, ສອງສະພາແຫ່ງຊາດ ກໍໄດ້ປຶກສາຫາລືກ່ຽວກັບການປັບປຸງບົດບັນທຶກວ່າດ້ວຍການຮ່ວມມື ລະຫວ່າງ ສະພາແຫ່ງຊາດ ແຫ່ງ ສປປລາວ ແລະ ສະພາຜູ້ແທນປະຊາຊົນ ແຫ່ງ ສ.ເບລາຣຸດ ທີ່ລົງນາມຮ່ວມກັນ ໃນປີ 2014.



ໃນຕອນທ້າຍ, ພະນະທ່ານ ປອ. ໄຊສົມພອນ ພົມວິຫານ ໃນນາມສະພາແຫ່ງຊາດ ແລະ ປະຊາຊົນບັນດາເຜົ່າ ໄດ້ສະແດງຄວາມຂອບໃຈຕໍ່ລັດຖະບານ ແລະ ປະຊາຊົນເບລາຣຸດ ທີ່ໄດ້ໃຫ້ການຊ່ວຍເຫລືອປະຊາຊົນລາວຕະຫລອດໄລຍະຜ່ານມາ ແລະ ອວຍພອນໃຫ້ສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ການຮ່ວມມືອັນດີງາມທີ່ມີມາແຕ່ດົນນານ ລະຫວ່າງສອງປະເທດລາວ-ເບລາຣຸດ ກໍຄື ລະຫວ່າງສອງອົງການນິຕິບັນຍັດ ຂອງສອງປະເທດລາວ-ເບລາຣຸດ ຈົ່ງສືບຕໍ່ຂະຫຍາຍຕົວ ແລະ ແໜ້ນແຟ້ນຍິ່ງໆຂຶ້ນ; ພ້ອມນັ້ນ, ທ່ານປະທານສະພາແຫ່ງຊາດລາວ ໄດ້ເຊື້ອເຊີນທ່ານປະທານສະພາຜູ້ແທນປະຊາຊົນ ເບລາຣຸດ ມາຢ້ຽມຢາມ ສປປລາວ ໃນເວລາທີ່ເໝາະສົມ ແລະ ປະທານສະພາຜູ້ແທນປະຊາຊົນ ເບລາຣຸດ ໄດ້ຮັບເອົາການເຊື້ອເຊີນດັ່ງກ່າວດ້ວຍຄວາມຍິນດີ.

(ນາງ ສຸພາວັນ ທອມສະນິດ ແລະ ນາງ ກຸກກິກ ບຸດດາໄຊ)



## ເຝິກອົບຮົມ...

ໃຫ້ແກ່ສະມາຊິກສະພາແຫ່ງຊາດ (ສສຊ) ຈາກ 10 ເຂດເລືອກຕັ້ງ ຄື: ຜົ້ງສາລີ, ຫລວງນ້ຳທາ, ອຸດົມໄຊ, ບໍ່ແກ້ວ, ຫລວງພະບາງ, ໄຊຍະບູລີ, ຫົວພັນ, ຊຽງຂວາງ, ສາລະວັນ ແລະ ໄຊສົມບູນ ໄດ້ຈັດຂຶ້ນທີ່ຫ້ອງປະຊຸມສູນການຮ່ວມມືສາກົນ ແລະ ເຝິກອົບຮົມ (ICTC) ນະຄອນຫລວງວຽງຈັນ ໃນລະຫວ່າງວັນທີ 15-16 ສິງຫາ 2022 ໂດຍການເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ຜູ້ຊີ້ນຳສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ທັງເປັນຫົວໜ້າຄະນະຊີ້ນຳການຍົກສູງຂີດຄວາມສາມາດ; ເຂົ້າຮ່ວມຂອງທ່ານ ນາງ ປິ່ງຄຳ ລາຊະສິມມາ ເລຂາທິການສະພາແຫ່ງຊາດ, ບັນດາປະທານ-ຮອງປະທານກຳມາທິການສະພາແຫ່ງຊາດ, ຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ, ບັນດາທ່ານສະມາຊິກສະພາແຫ່ງຊາດ, ຄະນະກົມ, ຄະນະພະແນກ ແລະ ວິຊາການກ່ຽວຂ້ອງຂອງສະພາແຫ່ງຊາດ ແລະ 10 ເຂດເລືອກຕັ້ງດັ່ງກ່າວ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີເປີດ, ປະທານກອງປະຊຸມໄດ້ໃຫ້ຮູ້ວ່າ: ໃນໄລຍະວັນທີ 1-2 ສິງຫາຜ່ານມາ, ກໍໄດ້ມີການຈັດກອງປະຊຸມເຝິກອົບຮົມໃຫ້ແກ່ສະມາຊິກສະພາແຫ່ງຊາດ ທີ່ມາຈາກ 8 ເຂດເລືອກຕັ້ງພາກກາງ ແລະ ພາກໃຕ້ ທີ່ຈັດຢູ່ແຂວງສະຫວັນນະເຂດມາແລ້ວ. ກອງປະຊຸມຄັ້ງນີ້ ແມ່ນເພື່ອຈັດເຝິກອົບຮົມໃຫ້ແກ່ສະມາຊິກສະພາແຫ່ງຊາດ ຈາກ 10 ເຂດເລືອກຕັ້ງ ໃຫ້ເພື່ອຄົບ ທັງ 18 ເຂດເລືອກຕັ້ງທົ່ວປະເທດ ໂດຍເປັນການຈັດຕັ້ງປະຕິບັດແຜນພັດທະນາການຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ 5 ປີ (2021-2025) ໂດຍສະເພາະແມ່ນແຜນການເຝິກອົບຮົມ ປີ 2022 ຂອງຄະນະຊີ້ນຳການຍົກສູງຂີດຄວາມສາມາດ ໃຫ້ບັນລຸຜົນສຳເລັດຕາມລະດັບຄາດໝາຍ. ທ່ານຍັງໄດ້ກ່າວວ່າ: ບັນດາທ່ານສະມາຊິກສະພາແຫ່ງຊາດ ມາຈາກບັນດາເຂດເລືອກຕັ້ງ ແລະ ສະມາຊິກສະພາແຫ່ງຊາດທີ່ປະຈຳຢູ່ສູນກາງ ທີ່ມີຫລາກຫລາຍສາຂາອາຊີບທີ່ແຕກຕ່າງກັນ, ມີທັງຜູ້ເກົ່າ ແລະ ຜູ້ໃໝ່ ມີໂອກາດຄົ້ນຄວ້າ ລົງເລິກຮຽນຮູ້ ແລະ ກຳແໜ້ນເນື້ອໃນທັກສະທີ່ຈຳເປັນ ເພື່ອເຮັດໃຫ້ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ກໍຄືຂອງສະພາແຫ່ງຊາດ ມີປະສິດທິພາບ ແລະ ປະສິດທິຜົນຍິ່ງຂຶ້ນ.

ໃນກອງປະຊຸມ, ທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ໄດ້ສະເໜີ ຫົວຂໍ້ເຝິກອົບຮົມ ກ່ຽວກັບທັກສະການຊັກຖາມ ແລະ ການປະກອບຄຳເຫັນ ແລະ ຫົວຂໍ້ ການລົງພົບປະຜູ້ມີສິດເລືອກຕັ້ງ; ທ່ານ ປອ. ລີເບີ ລີບົວປາວ ປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ ສະເໜີຫົວຂໍ້ກ່ຽວກັບການຕິດຕາມກວດກາແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ; ທ່ານ ຄຳແພງ ວິລະພັນ ປະທານກຳມາທິການຍຸຕິທຳ ສະເໜີຫົວຂໍ້ກ່ຽວກັບບົດຮຽນຕິດຕາມກວດກາຂອງສະພາແຫ່ງຊາດ; ພ້ອມນັ້ນ, ບັນດາທ່ານຜູ້ແທນກອງປະຊຸມ ໄດ້ເຊີດຊູຄວາມຮັບຜິດຊອບໃນການຮັບຟັງ, ການຄົ້ນຄວ້າປະກອບຄຳຄິດເຫັນ, ຮຽນຮູ້ ແລະ ກຳແໜ້ນບັນດາບົດຮຽນທີ່ວິທະຍາກອນສະເໜີຕໍ່ກອງປະຊຸມ ໄດ້ຢ່າງເລິກເຊິ່ງ ແລະ ປະກອບສ່ວນເຮັດໃຫ້ກອງປະຊຸມເຝິກອົບຮົມຄັ້ງນີ້ບັນລຸຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້.

ກອງປະຊຸມຄັ້ງນີ້, ໄດ້ຮັບການສະໜັບສະໜູນດ້ານງົບປະມານຈາກຄະນະເລຂາທິການສະພາແຫ່ງຊາດ ສົມທົບກັບການສະໜັບສະໜູນຈາກກອງທຶນອາຊີ, ກອງທຶນວຽກງານຕ່າງປະເທດ ແລະ ການຄ້າຂອງນິວຊີແລນ.

(ນາງ ປາກາລັກ ພົມມີໄຊ)

## ປະເທດ...

ຊາດໃນຍາມວິກິດການຊໍ່ຄາວເຊັ່ນນີ້?... ເພື່ອນຜູ້ອ່ານທ່ານໜຶ່ງມີຄວາມເຫັນວ່າ ເລື່ອງນີ້ພວກເຮົາຕ້ອງໄດ້ປັບປຸງພາຍໃນພວກເຮົາວ່າເປັນຫຍັງຈຶ່ງມີປາກົດການບໍ່ເຊື່ອໝັ້ນທະນາຄານພາຍໃນ.

ທ້າຍນີ້, ສຸດການສົນທະນາກໍມາລົງເອີຍເຖິງເລື່ອງຮັກຊາດ ແລະ ການນັບຖືຊາດສູງສຸດ... ເມື່ອໄດ້ມີສິ່ງນັ້ນໃນໝາກຫົວໃຈແລ້ວແນ່ນອນຈະເກີດປາກົດການຮັກເຊື້ອແພງຊາດຂຶ້ນມາທັນທີໃນລະດັບທີ່ແຕກຕ່າງກັນ.

ມີຄຳເຫັນອອກມາວ່າ: ຢາກໃຫ້ມີຜູ້ນຳໜ້າສ້າງຂະບວນການ ເພື່ອຊາດຍາມເກີດວິກິດການຊໍ່ຄາວຈາກການຂາດແຄນເງິນຕາຕ່າງປະເທດ. ພວກເພິ່ນຄິດວ່າຫາກມີທ່ານໃດທ່ານໜຶ່ງລຸກຂຶ້ນມາອອກໜ້າ; ຂະບວນການນີ້ຈະແຜ່ລາມໄປຢ່າງເຂັ້ມແຂງເພາະວ່າຄວາມເປັນລາວ.... ເລືອດລາວຍ່ອມຮ້ອນແຮງ ຫາກວ່າສິ່ງທີ່ຕົນໄດ້ກະທຳນັ້ນເພື່ອຜົນປະໂຫຍດຂອງຊາດ, ເພື່ອສະແດງໃຫ້ເຫັນວ່າບໍ່ເສຍຊາດເກີດ...

ປະເທດຊາດຄືສູງສຸດສຳລັບທ່ານ!!!!

ສະນັ້ນບຸນຄຸນແຜ່ນດິນຕ້ອງທົດແທນ....

## ເລື່ອງເດັ່ນ, ຂ່າວເດັດ

# ຄັດໂດຍ: ທອມສະນິດ

*❑ ກົມສົ່ງເສີມການຄ້າກະຊວງອຸດສາຫະກຳ ແລະ ການຄ້າ ສປປລາວ ຮ່ວມກັບກົມສົ່ງເສີມການຄ້າ ກະຊວງອຸດສາຫະກຳ ແລະ ການຄ້າ ສສ.ຫວຽດນາມ ແລະ ສູນການຄ້າລາວ-ໄອເຕັກ, ຈະຈັດງານວາງສະແດງສິນຄ້າ ລາວ-ຫວຽດນາມ ໃນລະຫວ່າງວັນທີ 25-29 ສິງຫາ 2022 ທີ່ສູນການຄ້າລາວ-ໄອເຕັກ (ຕຶກເກົ່າ) ເພື່ອສະເຫລີມສະຫລອງວັນສ້າງຕັ້ງສາຍພົວພັນການທູດລາວ-ຫວຽດນາມ ຄົບຮອບ 60 ປີ ແລະ ວັນເຊັນສົນທິສັນຍາມິດຕະພາບລາວ-ຫວຽດນາມ ຄົບຮອບ 45 ປີ ພາຍໃນງານວາງສະແດງ ມີຫ້ອງວາງສະແດງສິນຄ້າທັງໝົດ 200 ຫ້ອງ ໃນນັ້ນ, ມີທຸລະກິດຈາກ ສສ.ຫວຽດນາມ 120 ຫ້ອງ ແລະ ພາກທຸລະກິດລາວ ເຂົ້າຮ່ວມ 80 ຫ້ອງ ຈາກທົ່ວປະເທດ. ສ່ວນສິນຄ້າທີ່ນຳມາວາງສະແດງຄັ້ງນີ້ ສ່ວນໃຫຍ່ຈະເປັນປະເພດ ເຄື່ອງອຸປະໂພກ-ບໍລິໂພກ, ສິນຄ້າກະສິກຳປຸງແຕ່ງ, ຜະລິດຕະພັນການກະເສດ, ເຄື່ອງຫັດຖະກຳ, ເຄື່ອງຕັດຫຍິບ-ແຟຊັນ, ອາຫານທະເລ, ເຄື່ອງເຟີນິເຈີ, ຢາ ແລະ ອຸປະກອນການແພດ ແລະ ການສະແດງສິລະປະວັນນະຄະດີທີ່ເປັນເອກະລັກໂດດເດັ່ນ ຂອງສອງຊາດ ລາວ-ຫວຽດນາມ ແລະ ມີການແຂ່ງຂັນຟ້ອນ, ຮ້ອງເພງລາວ-ຫວຽດນາມ ຂອງນັກຮຽນ ແລະໄວໜຸ່ມພິເສດມີສິລະປະຈາກ ສສ.ຫວຽດນາມ ມາສະແດງທຸກມື້ຕະຫລອດງານ.*

***ນສພ. ປະຊາຊົນ 17/08/2022***

*❑ ກົມອຸຕຸນິຍົມ ແລະ ອຸທົກກະສາດ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂດຍການປະສານສົມທົບກັບກະຊວງພະລັງງານ ແລະ ບໍ່ແຮ່ ລາຍງານສະພາບນ້ຳໃນແຕ່ລະສາຍນ້ຳ ໂດຍສະເພາະເຂື່ອນທີ່ມີອ່າງເກັບນ້ຳຫລາຍແຫ່ງຢູ່ທົ່ວປະເທດ ກໍຍັງຢູ່ໃນເກນປົກກະຕິ ເຖິງແມ່ນວ່າຈະມີບາງເຂື່ອນໄດ້ມີການປ່ອຍນ້ຳຜ່ານທາງລະບາຍນ້ຳລົ້ນ ເຊັ່ນ: ເຂື່ອນນ້ຳກົງ 1 (ແຂວງອັດຕະປື) ແລະ ເຂື່ອນນ້ຳເທີນ 1 (ແຂວງບໍລິຄຳໄຊ) ແຕ່ລະດັບນ້ຳລຸ່ມເຂື່ອນມີການເໜັງຕີງເລັກນ້ອຍ ແລະ ຍັງບໍ່ມີຜົນກະທົບ. ໃນກໍລະນີປະລິມານນ້ຳໄຫລເຂົ້າອ່າງຍັງຄົງທີ່ສາມາດວິເຄາະໄດ້ຄື: ເຂື່ອນໄຟຟ້ານ້ຳຄານ 2 ແຂວງຫລວງພະບາງ ຍັງສາມາດເກັບກັກນ້ຳໄດ້ຕື່ມ 22,91 ລ້ານແມັດກ້ອນ ໂດຍຈະໃຊ້ເວລາປະມານ 11 ມື້ ນ້ຳຈຶ່ງຈະເຕັມອ່າງ; ເຂື່ອນໄຟຟ້ານ້ຳງື່ມ 5 ແຂວງຊຽງຂວາງ ຍັງສາມາດເກັບກັກ ນ້ຳໄດ້ຕື່ມ 48,61 ລ້ານແມັດກ້ອນ ໂດຍຈະໃຊ້ເວລາປະມານ 8 ມື້ ນ້ຳຈຶ່ງຈະເຕັມອ່າງ; ເຂື່ອນໄຟຟ້ານ້ຳຍວງແຂວງຊຽງຂວາງ ຍັງສາມາດເກັບກັກນ້ຳໄດ້ຕື່ມ 1.836,55 ລ້ານແມັດກ້ອນ ໂດຍຈະໃຊ້ເວລາປະມານ 1.181 ມື້ ນ້ຳຈຶ່ງຈະເຕັມອ່າງ; ເຂື່ອນນ້ຳທາ 1 ແຂວງບໍ່ແກ້ວ ຍັງສາມາດເກັບກັກນ້ຳໄດ້ຕື່ມ 250.231 ລ້ານແມັດກ້ອນ ໂດຍຈະໃຊ້ເວລາປະມານ 74 ມື້ ນ້ຳຈຶ່ງຈະເຕັມອ່າງ, ເຂື່ອນນ້ຳງຽບ 1 ແຂວງບໍລິຄຳໄຊ ຍັງສາມາດເກັບກັກນ້ຳໄດ້ຕື່ມ 702.35 ລ້ານ ແມັດກ້ອນ ໂດຍຈະໃຊ້ເວລາປະມານ 179 ມື້ ນ້ຳຈຶ່ງຈະເຕັມອ່າງ.*

***ນສພ. ປະເທດລາວ 18/08/2022***

*❑ ຂະແໜງການສຶກສາ ແລະ ກິລາ ມີ ລັດຖະກອນ ທັງໝົດ 83.485 ຄົນ ຍິງ 43.771 ຄົນ; ໃນນີ້, ລັດຖະກອນຄູ 74.041 ຄົນ ຍິງ 40.081 ຄົນ ແລະ ບໍລິຫານ 9.444 ຄົນ ຍິງ 3.690 ຄົນ; ໃນນັ້ນ, ຂັ້ນສູນກາງຄຸ້ມຄອງ 6.966 ຄົນ ຍິງ3.087 ຄົນ, ຂັ້ນແຂວງຄຸ້ມຄອງ 6.171 ຄົນ ຍິງ 3.079 ຄົນ ແລະ ຂັ້ນເມືອງຄຸ້ມຄອງ 70.348 ຄົນ ຍິງ 37.605 ຄົນ.*

***ນສພ. ວຽງຈັນໃໝ່ 18/08/2022***




## ຍົກລະດັບ...

ແຂວງ ໂດຍການເປັນປະທານຂອງທ່ານ ພູທອນ ວໍລະເພັດ ຮອງປະທານກຳມາທິການກົດໝາຍ; ເຂົ້າຮ່ວມມີທ່ານ ສຈ. ດາວອນ ຫວ່າງວິຈິດ ຄະນະທີ່ປຶກສາດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດ, ຫົວໜ້າກົມ, ຮອງຫົວໜ້າກົມ, ເລຂາທິການ ແລະ ປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂອງສະພາປະຊາຊົນຂັ້ນແຂວງ ຕະຫລອດຮອດພະນັກງານ-ລັດຖະກອນທີ່ກ່ຽວຂ້ອງເຂົ້າຮ່ວມ.

ທັງນີ້, ເພື່ອປັບປຸງການປະຕິບັດວຽກງານໃນການເປັນເສນາທິການໃນວຽກງານສ້າງ ແລະ ປັບປຸງກົດໝາຍ ໃຫ້ກຳມາທິການກົດໝາຍ ກໍຄືຄະນະປະຈຳສະພາແຫ່ງຊາດ ໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍ ແລະ ການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ພາຍໃນກຳມາທິການກົດໝາຍ ແລະ ບັນດາກົມພາຍໃນສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ເປັນລະບົບ.

ກອງປະຊຸມ ໄດ້ຮັບຟັງການສະເໜີກ່ຽວກັບການຄົ້ນຄວ້າຮ່າງກົດໝາຍ ຈາກທ່ານ ສຈ. ດາວອນ ຫວ່າງວິຈິດ; ສະເໜີບົດສະຫລຸບຖອດຖອນບົດຮຽນກ່ຽວກັບການສົ່ງຮ່າງກົດໝາຍໃຫ້ສະພາປະຊາຊົນຂັ້ນແຂວງຈັດຕັ້ງການທາບທາມຄຳເຫັນ ຈາກທ່ານ ຄຳຄ່ອງ ສີຫາປັນຍາ ຫົວໜ້າກົມກົດໝາຍ; ສະເໜີເຕັກນິກການທາບທາມຮ່າງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຂອງຕ່າງປະເທດ; ສະເໜີກ່ຽວກັບເຕັກນິກການສ້າງ ແລະ ປັບປຸງກົດໝາຍຂອງຕ່າງປະເທດ ຈາກຊ່ຽວຊານຕ່າງປະເທດ (ແບບທາງໄກ) ແລະ ສະເໜີກ່ຽວກັບການກຳນົດນະໂຍບາຍໃນການສ້າງກົດໝາຍ ຈາກຕາງໜ້າກົມກົດໝາຍກະຊວງຍຸຕິທຳ; ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ສົນທະນາ ແລະ ແລກປ່ຽນຄຳຄິດຄຳເຫັນເຊິ່ງກັນແລະກັນ.

ໃນໂອກາດນີ້, ທ່ານ ພູທອນ ວໍລະເພັດ ໄດ້ມີຄຳເຫັນວ່າ: ເພື່ອຮັບປະກັນການປະຕິບັດໜ້າທີ່ເປັນເສນາທິ ການທາງດ້ານວຽກງານສ້າງ ແລະ ປັບປຸງກົດໝາຍ ໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໄດ້ດຳເນີນໄປຢ່າງມີຄຸນນະພາບ, ປະສິດທິພາບ ແລະ ປະສິດທິຜົນ ເພື່ອສ້າງໃຫ້ພະນັກງານມີປະສົບການ, ມີຄວາມຊຳນານສະເພາະດ້ານ ແລະ ຄວາມເປັນມືອາຊີບ ຈຶ່ງມີຄວາມຈຳເປັນຕ້ອງໄດ້ຍົກລະດັບຄວາມຮູ້ໃຫ້ພະນັກງານ-ລັດຖະກອນ ເພື່ອໃຫ້ມີຄວາມຮູ້, ຄວາມສາມາດ ແລະ ກຳໄດ້ວຽກງານການສ້າງ, ປັບປຸງກົດໝາຍ ແລະ ວຽກງານອື່ນທີ່ປິ່ນອ້ອມ ທັງເພື່ອຮັບຟັງ ແລະ ແລກປ່ຽນຄຳຄິດຄຳເຫັນຕໍ່ເນື້ອໃນທີ່ກອງປະຊຸມໄດ້ຍົກຂຶ້ນມາ; ຖ້າທຽບໃສ່ເນື້ອໃນແລ້ວແມ່ນມີເວລາສັ້ນສົມຄວນ, ດ້ວຍເຫດນີ້ ເພື່ອຮັບປະກັນໃຫ້ກອງປະຊຸມຄັ້ງນີ້ດຳເນີນໄປດ້ວຍບັນຍາກາດຟົດຟື້ນ ແລະ ໄດ້ຮັບຜົນສຳເລັດຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້ ສະເໜີມາຍັງບັນດາທ່ານຈົ່ງຍົກສູງຄວາມຮັບຜິດຊອບເປັນເຈົ້າໃນການປະກອບຄຳຄິດຄຳເຫັນ, ສົນທະນາ, ແລກປ່ຽນບົດຮຽນເຊິ່ງກັນແລະກັນ ຢ່າງເລິກເຊິ່ງ ແລະ ກວ້າງຂວາງ.

ກອງປະຊຸມ ໄດ້ຮັບການສະໜັບສະໜູນຈາກມູນນິທິເວສມິນສະເຕີ ເພື່ອປະຊາທິປະໄຕ (WFD) ແລະ ງົບປະມານສົມທົບຈາກຄະນະເລຂາທິການສະພາແຫ່ງຊາດ.

(ນາງ ສຸພາວັນ ຫອມສະນິດ)

## ກວທສ...

(ສພຊ) ເພື່ອຮັບປະກັນໃຫ້ແກ່ການຮັບມືກັບການແຜ່ລະບາດຂອງພະຍາດໂຄວິດ-19 ຮອບໃໝ່, ການຄວບຄຸມການແຜ່ລະບາດຂອງພະຍາດໄຂ້ຍຸງລາຍ ແລະ ການເຝົ້າລະວັງພະຍາດທີ່ອາດຈະເກີດຂຶ້ນຕາມລະດູການໃຫ້ມີຈຸດສຸມ, ມີຄຸນນະພາບ ແລະ ມີປະສິດທິຜົນ ໃນລະຫວ່າງວັນທີ 15-17 ສິງຫາ 2022 ກຳມາທິການວັດທະນະທຳ-ສັງຄົມ (ກວທສ) ສະພາແຫ່ງຊາດ ໄດ້ລົງຕິດຕາມກວດກາ ແລະ ເກັບກຳຂໍ້ມູນ ຢູ່ກະຊວງສາທາລະນະສຸກ, ໂຮງໝໍມິດຕະພາບ, ໂຮງໝໍເສດຖາທິຣາດ, ໂຮງໝໍມະໂຫສົດ, ພະແນກສາທາລະນະສຸກນະຄອນຫລວງ ເຊິ່ງນຳໂດຍທ່ານ ດຣ. ບຸນລ້ອມ ແກ້ວບົວໂຮມ ຮອງປະທານກຳມາທິການວັດທະນະທຳ-ສັງຄົມ ພ້ອມດ້ວຍຄະນະ.

ຈຸດປະສົງຂອງການຕິດຕາມກວດກາຄັ້ງນີ້ ເພື່ອຈັດຕັ້ງຜັນຂະຫຍາຍແຜນດຳເນີນງານຂອງຄະນະປະຈຳສະພາແຫ່ງຊາດ ຊຸດທີ IX (2021-2025), ຕິດຕາມ ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ໃຫ້ມີຈຸດສຸມ, ມີປະສິດທິພາບ, ປະສິດທິຜົນ; ເພື່ອຕິດຕາມການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ສະບັບເລກທີ 55/ສພຊ, ລົງວັນທີ 08/07/2022; ຕິດຕາມການຈັດຕັ້ງປະຕິບັດແຜນປະຕິບັດງານກ່ຽວກັບການປ້ອງກັນ ແລະ ຄວບຄຸມພະຍາດໄຂ້ຍຸງລາຍ ໂດຍນຳໃຊ້ມາດຕະການເຊື່ອມສານແບບຄົບຊຸດ 2019-2023; ເພື່ອເກັບກຳຂໍ້ມູນກ່ຽວກັບການຈັດຕັ້ງປະຕິບັດບັນດາມາດຕະການກ່ຽວກັບການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19 ແລະ ພະຍາດໄຂ້ຍຸງລາຍ ເພື່ອນຳມາວິເຄາະວິໄຈ ແລະ ລາຍງານຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ເພື່ອສະເໜີທິດທາງ, ວິທີການ ແລະ ມາດຕະການໃຫ້ລັດຖະບານປັບປຸງແກ້ໄຂໃນຕໍ່ໜ້າ.

ເນື້ອໃນຂອງການຕິດຕາມກວດກາຄັ້ງນີ້ ປະກອບມີ: ການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ສະບັບເລກທີ 55/ສພຊ, ລົງວັນທີ 08/07/2022; ຕິດຕາມກວດກາບັນດາມາດຕະການປ້ອງກັນ, ຄວບຄຸມ ແລະ ການແກ້ໄຂການແຜ່ລະບາດພະຍາດໂຄວິດ-19; ຕິດຕາມກວດກາ ແຜນປະຕິບັດງານກ່ຽວກັບການກັນ ແລະ ການຄວບຄຸມພະຍາດໄຂ້ຍຸງລາຍ ໂດຍນຳໃຊ້ມາດຕະການເຊື່ອມສານແບບຄົບຊຸດ 2019-2023.

ໂອກາດດັ່ງກ່າວ, ໄດ້ຮັບຟັງການລາຍງານໂດຍຫຍໍ້ຈາກກົມ, ພະແນກການກ່ຽວຂ້ອງຂອງກະຊວງສາທາລະສະສຸກ, ໂຮງຫມໍມິດຕະພາບ, ໂຮງໝໍເສດຖາທິຣາດ, ໂຮງໝໍມະໂຫສົດ, ພະແນກສາທາລະນະສຸກນະຄອນຫລວງ; ນອກຈາກນັ້ນ, ຄະນະ ຍັງໄດ້ລົງບ້ານຈຳນວນໜຶ່ງ ເພື່ອເກັບກຳຂໍ້ມູນນຳນາຍບ້ານ, ອສບ ບ້ານ ແລະ ເກັບກຳຂໍ້ມູນຕົວຈິງນຳເຮືອນພໍ່ແມ່ປະຊາຊົນ; ພ້ອມນັ້ນ, ຄະນະຕິດຕາມຂອງກຳມາທິການວັດທະນະທຳ-ສັງຄົມ ກໍໄດ້ມີຄຳຖາມເຈາະຈີ້ມ ຕໍ່ແຕ່ລະພາກສ່ວນ ເພື່ອໃຫ້ໄດ້ຂໍ້ມູນທີ່ເປັນປະໂຫຍດ ແລະ ນຳເອົາຂໍ້ມູນທີ່ໄດ້ຮັບຄັ້ງນີ້ ລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ.

(ນາງ ສຸມົນທາ ງາໄຊ)

## ຄະນະ...

(ສພຊ) ວັນທີ 19 ສິງຫາ 2022, ທີ່ສະພາແຫ່ງຊາດ, ຄະນະຫ້ອງການຄຸ້ມຄອງຕະຫລາດພະລັງງານ ຂອງສິງກະໂປ (EMA) ນຳໂດຍທ່ານ ໂຈນາທານ ໂກ (Jonathan Goh) ຫົວໜ້າຝ່າຍພົວພັນສາກົນ ແລະ ທ່ານ ຢູຈີນ ໂຕ (Eugene Toh) ຫົວໜ້າຝ່າຍການຄ້າ, ເຊື່ອມໂຍງພະລັງງານ ຫ້ອງການຄຸ້ມຄອງຕະຫລາດພະລັງງານ ພ້ອມດ້ວຍຄະນະ ໄດ້ເຂົ້າພົບປະ ແລະ ເຮັດວຽກຮ່ວມກັບທ່ານຄຳມ່ວນ ຊົມສີຫາປັນຍາ ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ສະພາແຫ່ງຊາດລາວ ພ້ອມດ້ວຍຄະນະ ໃນໂອກາດເດີນທາງມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປລາວ ໃນລະຫວ່າງວັນທີ 17-20 ສິງຫາ 2022.

ການພົບປະເຮັດວຽກຄັ້ງນີ້, ເພື່ອສືບຕໍ່ປະຕິບັດຂໍ້ລິເລີ່ມໂຄງການເຊື່ອມໂຍງພະລັງງານໃນຂົງເຂດພາກພື້ນ ລາວ-ໄທ-ມາເລເຊຍ-ສິງກະໂປ ທີ່ລັດຖະບານລາວ ໄດ້ມີການພົວພັນຮ່ວມມືທາງດ້ານພະລັງງານກັບສິງກະໂປ ເປັນຕົ້ນແມ່ນການຊື້-ຂາຍໄຟຟ້າ ແລະ ອື່ນໆ ທີ່ກ່ຽວຂ້ອງ.

ໃນໂອກາດນີ້, ທ່ານ ຄຳມ່ວນ ຊົມສີຫາປັນຍາ ໄດ້ໃຫ້ຮູ້ວ່າ: ກສຕສ ປະຕິບັດພາລະບົດບາດເປັນເສນາທິການໃຫ້ແກ່ສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ, ໃນການສ້າງ, ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍ, ການຄົ້ນຄ້ວາບັນຫາສຳຄັນພື້ນຖານຂອງປະເທດຊາດ, ຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິຂອງສະພາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ຄົ້ນຄວ້າປະກອບຄຳເຫັນກ່ຽວກັບການໃຫ້ສັດຕະຍາບັນແກ່ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປລາວ ເປັນພາຄີ ແລະ ຄຳສະເໜີຂອງປະຊາຊົນ ໃນຂົງເຂດກະສິກຳ ແລະ ປ່າໄມ້, ໂຍທາທິການ ແລະ ຂົນສົ່ງ, ອຸດສະຫະກຳ ແລະ ການຄ້າ, ເຕັກໂນໂລຊີ ແລະ ການສື່ສານ, ພະລັງງານ ແລະ ບໍ່ແຮ່ ແລະ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ເຂດເສດຖະກິດພິເສດ ໃນບັນດາຈຳນວນ 6 ກະຊວງ ຄື: ກະຊວງກະສິກຳ ແລະ ປ່າໄມ້, ກະຊວງອຸດສະຫະກຳ ແລະ ການຄ້າ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງເຕັກໂນໂລຊີ ແລະ ການສື່ສານ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ກະຊວງພະລັງງານ ແລະ ບໍ່ແຮ່; ພ້ອມນັ້ນ, ທ່ານຍັງໄດ້ຮູ້ຕື່ມວ່າ: ການພັດທະນາພະລັງງານໄຟຟ້າ ຂອງ ສປປລາວ ໄດ້ລິເລີ່ມແຕ່ປີ 1970 ເປັນຕົ້ນມາ ເຫັນວ່າມີການຂະຫຍາຍຕົວສູງ ເມື່ອທຽບກັບຂະແໜງເສດຖະກິດອື່ນ ໂດຍກຳລັງການຜະລິດມີອັດຕາການຂະຫຍາຍຕົວສະເລ່ຍປະມານ 17% ຕໍ່ປີ ຈາກ 30 ເມກາວັດ ມາເຖິງທ້າຍປີ 2020 ສປປລາວ ມີແຫລ່ງຜະລິດໄຟຟ້າທັງໝົດ 82 ແຫລ່ງລວມກຳລັງການຜະລິດຕິດຕັ້ງ 10.091 ເມກາວັດ, ສາມາດຜະລິດໄຟຟ້າໄດ້ປະມານ 53.197 ລ້ານກິໂລວັດໂມງຕໍ່ປີ; ໃນປັດຈຸບັນ, ມີແຫລ່ງຜະລິດໄຟຟ້າຈາກເຂື່ອນໄຟຟ້າພະລັງງານນ້ຳ ກວມເອົາ 80,41%, ພະລັງງານໄຟຟ້າຖ່ານຫີນ 18,61%, ພະລັງງານຊີວະມວນ ແລະ ພະລັງງານແສງຕາເວັນ 0,98% ຂອງກຳລັງຕິດຕັ້ງໄຟຟ້າທັງໝົດ, ໂຄງການໄຟຟ້ານ້ຳຕົກ ແບບຝາຍນ້ຳລົ້ນ Run of the River ແລະ ມີອ່າງເກັບນ້ຳຂະໜາດນ້ອຍ ກວມເອົາປະມານ 70% ຂອງແຫລ່ງຜະລິດໄຟຟ້າທັງໝົດ, ຈຳນວນໂຄງການທີ່ມີກຳລັງຕິດຕັ້ງໄຟຟ້າ 15 ເມກາວັດລົງໄປ ແມ່ນມີຫລາຍກວ່າ 53% ຫລື ຫລາຍກວ່າ 21% ຂອງກຳລັງຕິດຕັ້ງໄຟຟ້າທັງໝົດ.

(ຂ່າວ: ສຸພາວັນ ຫອມສະນິດ,
ຮູບພາບ: ກຸກກິກ ບຸດດາໄຊ)



## ສຳເລັດ...

ກຳມະບານລາວ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມກອງປະຊຸມສຳມະນາ ພາຍໃຕ້ຫົວຂໍ້: “ບົດບາດຂອງລັດຖະສະພາໃນການສົ່ງເສີມການຕອບໂຕ້ແບບກວມລວມ ແລະ ຍືນຍົງ ຕໍ່ພາວະສຸກເສີນທາງດ້ານສຸຂະພາບ: ກໍລະນີສຶກສາກ່ຽວກັບປະສິດທິຜົນ ແລະ ອຸປະສັກ ຕໍ່ແຜນການຕອບໂຕ້ກັບພະຍາດໂຄວິດ-19 ໃນລະດັບຊາດ” ເຊິ່ງຈັດຂຶ້ນທີ່ຊຽມລຽບ, ຣາຊະອານາຈັກກຳປູເຈຍ.

ກອງປະຊຸມສຳມະນາດັ່ງກ່າວ, ຈັດຂຶ້ນພາຍໃຕ້ການຮ່ວມມືຂອງຄະນະກຳມາທິການທີ 8 ກ່ຽວກັບວຽກງານສາທາລະນະສຸກ, ສັງຄົມ, ຊາວໜຸ່ມ, ແຮງງານ, ການເຝິກອົບຮົມວິຊາຊີບ ແລະ ວຽກງານແມ່ຍິງ ຂອງສະພາແຫ່ງຊາດແຫ່ງຣາຊະອານາຈັກກຳປູເຈຍ, ສູນລັດຖະສະພາອາຊີ (PCAsia) ແລະ ກອງເລຂາສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (AIPA) ໂດຍມີສະມາຊິກສະພາແຫ່ງຊາດຈາກບັນດາລັດຖະສະພາສະມາຊິກ AIPA, ລັດຖະມົນຕີກະຊວງສາທາລະນະສຸກກຳປູເຈຍ, ຫົວໜ້າຄະນະບໍລິຫານງານຊາວໜຸ່ມກຳປູເຈຍ, ອຳນາດການປົກຄອງແຂວງຊຽມລຽບ ແລະ ຕາງໜ້າຈາກອົງການຈັດຕັ້ງສາກົນ ໃນບັນດາປະເທດອາຊຽນ ເຂົ້າຮ່ວມທັງໝົດ 47 ທ່ານ.

ກອງປະຊຸມຄັ້ງນີ້, ໄດ້ຮັບຟັງການນຳເໜີກ່ຽວກັບບົດບາດຂອງລັດຖະສະພາ ໃນການປະກອບສ່ວນ ແລະ ສົ່ງເສີມການຮັບມືກັບການແຜ່ລະບາດຂອງພະຍາດໂຄວິດ-19 ຈາກບັນດາສະມາຊິກລັດຖະສະພາທີ່ເຂົ້າຮ່ວມ ພ້ອມທັງຮັບຟັງການລາຍງານກ່ຽວກັບສະພາບການການຕອບໂຕ້ພະຍາດລະບາດໂຄວິດ-19 ຈາກຕາງໜ້າອົງການຈັດຕັ້ງສາກົນຂອງປະເທດຕ່າງໆໃນອາຊຽນ. ນອກນັ້ນ, ໃນກອງປະຊຸມຍັງໄດ້ມີການແລກປ່ຽນແນວທາງ ແລະ ວິທີການທີ່ດີໃນການແກ້ໄຂບັນຫາການແຜ່ລະບາດໄລຍະຜ່ານມາ ລວມໄປເຖິງການສົ່ງເສີມຄວາມໂປ່ງໃສ, ຄວາມຮັບຜິດຊອບ ແລະ ການປ້ອງກັນທາງດ້ານສຸຂະພາບຂອງປະຊາຊົນ ທັງໃນລະຫວ່າງການແຜ່ລະບາດ ແລະ ພາຍຫລັງການແຜ່ລະບາດຂອງພະຍາດໂຄວິດ-19 ຢ່າງສ້າງສັນ ແລະ ຟົດຟື້ນ.

ໂອກາດດັ່ງກ່າວ, ທ່ານ ພອນສານ ວິໄລເມັ້ງ ຜູ້ແທນສະພາແຫ່ງຊາດລາວ ໄດ້ມີຄຳເຫັນຕໍ່ກອງປະຊຸມ ໂດຍໄດ້ຍົກໃຫ້ເຫັນເຖິງສະພາບການການແຜ່ລະບາດຂອງພະຍາດໂຄວິດ-19 ໃນ ສປປລາວ ແລະ ການຈັດຕັ້ງປະຕິບັດພາລະບົດບາດຂອງສະພາແຫ່ງຊາດລາວ ໃນການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ-19, ເຊິ່ງສະພາແຫ່ງຊາດລາວ ໄດ້ໃຫ້ຄວາມສຳຄັນໃນການຊຸກຍູ້ສົ່ງເສີມການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມພະຍາດລະບາດ, ກົດໝາຍວ່າດ້ວຍການໃຫ້ວັກຊີນກັນພະຍາດ ຢ່າງເຂັ້ມງວດ, ພ້ອມທັງຕິດຕາມກວດກາ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຂອງລັດຖະບານ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວຢ່າງໃກ້ສິດ. ພ້ອມນັ້ນ, ທ່ານຍັງໄດ້ຮຽກຮ້ອງໃຫ້ສະມາຊິກລັດຖະສະພາ AIPA, ອົງການຈັດຕັ້ງສາກົນ ແລະ ພາກສ່ວນຕ່າງໆ ສືບຕໍ່ຮ່ວມມື ແລະ ສະໜັບສະໜູນເຊິ່ງກັນ ແລະ ກັນ ເພື່ອປ້ອງກັນ, ຄວບຄຸມ ແລະ ຕອບໂຕ້ການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ພະຍາດລະບາດອື່ນໆທີ່ອາດຈະເກີດຂຶ້ນໃນອະນາຄົດໃຫ້ໝົດໄປຢ່າງຖາວອນ.

# ຖະແຫລງຜົນສຳເລັດ ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ອຸດົມໄຊ

(ສພຊ) ຕອນເຊົ້າຂອງວັນສຸກທີ 12 ສິງຫາ 2022 ຢູ່ທີ່ຫ້ອງສະຕູດິໂອສະຖານີວິທະຍຸ-ໂທລະພາບແຂວງ ທ່ານ ນາງ ວັນສີ ພອງມະໄລ ເລຂາທິການ ສພຂ, ຕາງໜ້າຄະນະປະຈຳ ສພຂ ໄດ້ຖະແຫລງຕໍ່ສື່ມວນຊົນຂອງແຂວງກ່ຽວກັບຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຊຸດທີ II ວ່າ: ຂ້າພະເຈົ້າມີຄວາມຍິນດີ ແລະ ຂໍຖືເປັນກຽດຢ່າງສູງ ແຈ້ງມາຍັງບັນດາທ່ານການນຳພັກ-ລັດ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫລວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່-ແມ່ພີ່ນ້ອງປະຊາຊົນບັນດາເຜົ່າໃນທົ່ວແຂວງອຸດົມໄຊຮັບຊາບ ກ່ຽວກັບຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຊຸດທີ II.



ກອງປະຊຸມໄດ້ໄຂຂຶ້ນຢ່າງເປັນທາງການໃນລະຫວ່າງວັນທີ 9-10 ສິງຫາ 2022 ໃຊ້ເວລາ 2 ວັນ, ທີ່ສະໂມສອນແຂວງ ໂດຍການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ຮອງເລຂາຄະນະບໍລິຫານງານພັກແຂວງ, ປະທານ ສພຂ. ມີຄະນະສະມະຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ, ຄະນະປະຈຳ ສພຂ, ການນຳແຂວງ, ແຂກເຊີນ ແລະ ສະມະຊິກສະພາປະຊາຊົນແຂວງປະຈໍເຂດເລືອກຕັ້ງ 7 ເມືອງ ເຂົ້າຮ່ວມ ທັງໝົດ 138 ທ່ານ ຍິງ 28 ທ່ານ, ໃນນີ້ ສະມະຊິກສະພາປະຊາຊົນແຂວງ 29 ທ່ານ ຍິງ 10 ທ່ານ.

ກອງປະຊຸມດຳເນີນດ້ວຍບັນຍາກາດແຫ່ງການເສີມຂະຫຍາຍສິດປະຊາທິປະໄຕຂອງບັນດາທ່ານສະມາຊິກສະພາປະຊາຊົນແຂວງ (ສສຂ) ໃນການພິຈາລະນາ ແລະ ຮັບຮອງເອົາບັນດາເນື້ອໃນສຳຄັນພື້ນຖານຂອງແຂວງ ທີ່ນຳມາພິຈາລະນາໃນກອງປະຊຸມຄັ້ງນີ້ ໂດຍໄດ້ອອກເປັນມະຕິກອງປະຊຸມ ສພຂ ດັ່ງນີ້:

1. ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດສັງຄົມ, ແຜນງົບປະມານແຫ່ງລັດປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການປະຈຳ 6 ເດືອນທ້າຍປີ 2022 ຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍ ການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ;

2. ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານ ຂອງຄະນະປະຈຳ ສພຂ ກ່ຽວກັບການເຄື່ອນໄຫວວຽກງານ ຂອງ ສພຂ ນັບແຕ່ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາປະຊາຊົນແຂວງ ຊຸດທີ II ຫາກອງປະຊຸມສະໄມສາມັນເທື່ອທີ 3 ແລະ ແຕ່ນີ້ຮອດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ;

3. ມະຕິວ່າດ້ວຍການພິຈາລະນາ, ຮັບຮອງເອົາຮ່າງຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍ ການຄຸ້ມຄອງຈັດງານປະເພນີຕ່າງໆຢູ່ແຂວງອຸດົມໄຊ (ສະບັບສ້າງໃໝ່);

4. ມະຕິວ່າດ້ວຍການພິຈາລະນາ, ຮັບຮອງເອົາຂໍ້ຕົກລົງຂອງທ່ານເຈົ້າແຂວງວ່າດ້ວຍການປະເມີນລາຄາທີ່ດິນໃນທົ່ວແຂວງອຸດົມໄຊ (ປັບປຸງຄືນ ສະບັບເລກທີ 506/ຈຂ.ອຊ, ລົງວັນທີ 19 ພຶດສະພາ 2020).

ການພິຈາລະນາຮັບຮອງເອົາບັນດາຂໍ້ຕົກລົງດັ່ງກ່າວເປັນການສືບຕໍ່ຈັດຕັ້ງປະຕິບັດແຜນການສ້າງ ແລະ ປັບປຸງນິຕິກຳ 5 ປີຂອງ ສພຂ ຊຸດທີ II ເຊິ່ງເປັນການສືບຕໍ່ຫັນປ່ຽນຢ່າງແຂງແຮງ ແລະ ຮອບດ້ານ ໃນການສ້າງລັດທີ່ປົກຄອງດ້ວຍກົດໝາຍ ແລະ ນິຕິກຳ ໃຫ້ເປັນຮູບປະທຳ, ເຂົ້າສູ່ວຽກງານຕົວຈິງເທື່ອລະກ້າວ, ເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດໝາຍນັບມື້ເປັນລະບົບຄົບຊຸດ ແລະ ມີປະສິດທິຜົນຢ່າງແທ້ຈິງ;

ພ້ອມກັນນັ້ນ, ໄດ້ສະເໜີໃຫ້ພາກສ່ວນກ່ຽວຂ້ອງຂຶ້ນຊີ້ແຈງ ຕໍ່ກັບຄຳຊັກຖາມຂອງ ສສຂ ກ່ຽວກັບບັນຫາທີ່ພົ້ນເດັ່ນຢູ່ພາຍໃນແຂວງ, ກອງປະຊຸມຍັງໄດ້ຮັບຟັງການປະກອບຄຳເຫັນຂອງທ່ານເຈົ້າແຂວງ ເຊິ່ງໄດ້ສັງລວມຄືນບັນດາຄຳຊັກຖາມຂອງ ສສຂ ແລະ ການຕອບຄຳຊັກຖາມຂອງບັນດາອົງການທີ່ກ່ຽວຂ້ອງເພື່ອເປັນທິດໃນການຈັດຕັ້ງປະຕິບັດວຽກງານຂອງອົງການປົກຄອງແຂວງໃນຕໍ່ໜ້າ; ຄຽງຄູ່ກັບການພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນດັ່ງກ່າວ, ຕະຫລອດໄລຍະດຳເນີນກອງປະຊຸມ ໄດ້ຮັບຄຳຄິດເຫັນ ແລະ ຄຳສະເໜີຂອງປະຊາຊົນບັນດາເຜົ່າ ຜ່ານໂທລະສັບສາຍດ່ວນ (081 156) ທັງໝົດ 11 ບັນຫາ, ໃນນີ້ ຂົງເຂດເສດຖະກິດ 9 ບັນຫາ, ຂົງເຂດວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ 1 ບັນຫາ ແລະ ຂົງເຂດ ຍຸຕິທຳ, ປກຊ-ປກສ 1 ບັນຫາ. ຕໍ່ກັບຄຳຄິດເຫັນດັ່ງກ່າວຄະນະປະຈຳ ສພຂ ຈະໄດ້ຈັດກອງປະຊຸມຄົ້ນຄວ້າປຶກສາຫາລືຢ່າງຮີບດ່ວນເພື່ອສັງລວມ ແລະ ມອບໃຫ້ຄະນະກຳມະການສະເໜີຕໍ່ພາກສ່ວນກ່ຽວຂ້ອງຄົ້ນຄ້ວາພິຈາລະນາ ແລະ ແຈ້ງຕອບໃຫ້ພາກສ່ວນກ່ຽວຂ້ອງ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

ອີກເທື່ອໜຶ່ງ, ຕາງໜ້າໃຫ້ຄະນະປະຈຳ ສພຂ, ຂໍຂອບໃຈມາຍັງບັນດາທ່ານການນຳແຂວງ, ພະນັກງານລັດຖະກອນ, ທະຫານ, ຕຳຫລວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າໃນທົ່ວແຂວງອຸດົມໄຊ ທີ່ຕິດຕາມການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ອຸດົມໄຊ ຊຸດທີ II ຄັ້ງນີ້, ຂໍສະແດງຄວາມຂອບໃຈ ແລະ ຊົມເຊີຍຢ່າງຈິງໃຈມາຍັງສື່ມວນຊົນຂອງແຂວງ ທີ່ໄດ້ຕິດຕາມຢ່າງໃກ້ຊິດ ເພື່ອເກັບກຳຂ່າວ ແລະ ເຜີຍແຜ່ຢ່າງທັນການກ່ຽວກັບການດຳເນີນກອງປະຊຸມໃນຄັ້ງນີ້ ໃຫ້ແກ່ສັງຄົມໄດ້ຮັບຊາບຢ່າງທົ່ວເຖິງ ແລະ ຂໍຂອບໃຈມາຍັງກຳລັງ ປກຊ-ປກສ, ແພດໝໍ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກຂັ້ນ ທີ່ໄດ້ໃຫ້ການກອບສ່ວນ ແລະ ສະນັບສະໜູນກອງປະຊຸມສຳເລັດລົງຢ່າງຈົບງາມ.

(ແສງພອນ ອິນນະລົງ)

# ປຶກສາຫາລືກ່ຽວກັບ ການສ້າງນິຕິກຳໃຕ້ກົດໝາຍຂອງແຂວງຜົ້ງສາລີ



(ສພຊ) ຕອນເຊົ້າວັນທີ 12 ສິງຫາ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຜົ້ງສາລີ ໄດ້ຈັດກອງປະຊຸມປຶກສາຫາລື ກ່ຽວກັບການສ້າງນິຕິກຳໃຕ້ກົດໝາຍຂອງແຂວງ ໂດຍການເປັນປະທານຂອງທ່ານ ຫຸມເຜັງ ຈອມວິສານ ຮອງປະທານ ສພຂ; ມີບັນດາປະທານ-ຮອງປະທານຄະນະກຳມະການ ສພຂ, ຕາງໜ້າຈາກພະແນກຍຸຕິທຳແຂວງ, ພະແນກພາຍໃນແຂວງ, ພະແນກແຜນການ ແລະ ການລົງທຶນແຂວງ, ພະແນກສຶກສາທິການ ແລະ ກິລາແຂວງ, ກອງບັນຊາການ ປກສ ແຂວງ, ແນວລາວສ້າງຊາດແຂວງ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງພາຍໃນ ສພຂ ເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້, ກໍເພື່ອປຶກສາຫາລື ແລະ ກວດກາເບິ່ງຄວາມພ້ອມກ່ຽວກັບການສ້າງ ນິຕິກຳໃຕ້ກົດໝາຍຂອງແຂວງ ເປັນຕົ້ນ: ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການສະກັດກັ້ນ, ຕ້ານ ແລະ ແກ້ໄຂບັນຫາຢາເສບຕິດຢູ່ແຂວງຜົ້ງສາລີ; ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການຈັດງານບຸນປະເພນີ ຢູ່ພາຍໃນແຂວງຜົ້ງສາລີ; ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການສ້າງກອງທຶນກິລາກາຍຍະກຳ ແຂວງຜົ້ງສາລີ; ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍກຳນົດຫົວໜ່ວຍລາຄາສິ່ງປຸກສ້າງ, ພືດອຸດສາຫະກຳ ແລະ ພືດກະສິກຳ ແລະ ໜັງສະເໜີຂອງອົງການປົກຄອງແຂວງທີ່ສະເໜີໃຫ້ ສພຂ ຄົ້ນຄວ້າ, ພິຈາລະນາຮັບຮອງເອົາແຊງຂອງຊົນເຜົ່າອາຄາ 2 ແຊງ (ແຊງປາລາ ແລະ ແຊງພິຊໍ) ເພື່ອຄວາມເປັນເອກະພາບທາງເນື້ອໃນ ແລະ ຫລັກການ ໃຫ້ມີຄວາມຮັດກຸມ.

ທີ່ປະຊຸມ, ໄດ້ຮັບຟັງທ່ານ ຄຳພັນ ຄຸນສົມບັດ ຮອງປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຂຶ້ນສະເໜີຜົນຂອງການຄົ້ນຄວ້າ, ກວດກາກ່ຽວກັບເນື້ອໃນຮ່າງນິຕິກຳໃຕ້ກົດໝາຍຂອງອົງການປົກຄອງແຂວງ ຈຳນວນ 4 ສະບັບ ແລະ ການສະເໜີໃຫ້ ສພຂ ຮັບຮອງເອົາແຊງຂອງຊົນເຜົ່າອາຄາ 2 ແຊງ (ແຊງປາລາ ແລະ ແຊງພິຊໍ). ຈາກນັ້ນ, ຜູ້ແທນກອງປະຊຸມກໍໄດ້ຜັດປ່ຽນກັນປະກອບຄຳເຫັນຕໍ່ເນື້ອໃນດັ່ງກ່າວຢ່າງກົງໄປກົງມາ ເພື່ອຮັບປະກັນໃຫ້ເນື້ອໃນມີຄວາມສອດຄ່ອງ ແລະ ຖືກຕ້ອງທາງດ້ານລະບຽບ, ຫລັກການ ແລະ ຮັບປະກັນເຖິງຄວາມເປັນທຳຂອງສັງຄົມ.

ຕອນທ້າຍ, ທ່ານ ຫຸມເຜັງ ຈອມວິສານ ໄດ້ສັງລວມຄືນຜົນຂອງກອງປະຊຸມປຶກສາຫາລື ພ້ອມທັງຮຽກຮ້ອງໃຫ້ແຕ່ລະພາກສ່ວນທີ່ກ່ຽວຂ້ອງເອົາໃຈໃສ່ໃນການປັບປຸງເນື້ອໃນນິຕິກຳໃຕ້ກົດໝາຍດັ່ງກ່າວ ເພື່ອຮັບປະກັນໃຫ້ນຳສະເໜີເຂົ້າໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຊຸດທີ II ຄົ້ນຄວ້າພິຈາລະນາ ແລະ ຮັບຮອງເອົາຕາມລະບຽບກົດໝາຍ.

(ນາງ ສຸກສົມພອນ ແກ້ວແສງພະຈັນ)



# ກອງປະຊຸມຮ່ວມລະຫວ່າງສະພາປະຊາຊົນແຂວງ ແລະ ອົງການປົກຄອງແຂວງເຊກອງ



(ສພຊ) ກອງປະຊຸມຮ່ວມ ລະຫວ່າງສະພາປະຊາຊົນແຂວງ (ສພຂ) ແລະ ອົງການປົກຄອງແຂວງ ໄດ້ໄຂຂຶ້ນເມື່ອວັນທີ 9 ສິງຫາຜ່ານມາ ທີ່ສະໂມສອນ ສພຂ ເຊກອງ ໂດຍການເປັນປະທານຮ່ວມຂອງທ່ານ ເຫລັກໄຫລ ສີວິໄລ ເລຂາພັກແຂວງ, ເຈົ້າແຂວງເຊກອງ ແລະ ທ່ານ ດົງເຜັດ ພະຍົນ ຮອງເລຂາພັກແຂວງ, ປະທານ ສພຂ, ມີບັນດາທ່ານ ຄະນະປະຈຳພັກແຂວງ, ກຳມະການພັກແຂວງ, ຄະນະປະຈຳສະພາປະຊາຊົນແຂວງ ແລະ ພະແນກການທີ່ກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ດົງເຜັດ ພະຍົນ ໄດ້ກ່າວໄຂກອງປະຊຸມວ່າ: ກອງປະຊຸມໃນຄັ້ງນີ້ ຈະໄດ້ດຳເນີນເປັນເວລາ 1 ຄາບ ເຊິ່ງເປັນກອງປະຊຸມທີ່ມີຄວາມໝາຍສຳຄັນ ໂດຍບັນດາຜູ້ແທນຈະໄດ້ພ້ອມກັນຄົ້ນຄ້ວາ ແລະ ປະກອບຄຳຄິດຄຳເຫັນໃສ່ບັນດາເນື້ອໃນເອກະສານທີ່ສຳຄັນຄື: ບົດສະຫລຸບການຈັດຕັ້ງປະຕິບັດການພົວພັນລະຫວ່າງ ສພຂ ກັບອົງການປົກຄອງແຂວງ ໃນໄລຍະຜ່ານມາ; ຮ່າງແຜນການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຊຸດທີ II; ການກະກຽມຄວາມພ້ອມດ້ານເນື້ອໃນຕ່າງໆຂອງອົງການປົກຄອງແຂວງ ແລະ ເອກະສານອື່ນໆທີ່ກ່ຽວຂ້ອງ ທີ່ຈະນຳເຂົ້າລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຊຸດທີ II. ພ້ອມດຽວກັນນີ້, ທ່ານຍັງໄດ້ຮຽກຮ້ອງບັນດາຜູ້ແທນກອງປະຊຸມ ຈົ່ງຍົກສູງຄວາມຮັບຜິດຊອບການເມືອງຂອງຕົນ, ສຸມສະຕິປັນຍາໃນການຄົ້ນຄວ້າ, ປະກອບຄຳຄິດຄຳເຫັນໃສ່ເນື້ອໃນເອກະສານດັ່ງກ່າວ ໃຫ້ເລິກເຊິ່ງເຖິງຖອງ ໂດຍສຸມໃສ່ຄົ້ນຄ້ວາຄວາມຈຳເປັນ-ຄວາມຮຽກຮ້ອງຕ້ອງການ ຜົນໄດ້ຜົນເສຍ ກ້າວໄປເຖິງຄວາມເອກະພາບດ້ານເນື້ອໃນ, ທັດສະນະ ແລະ ຮັບຮອງທິດທາງແຜນການດັ່ງກ່າວໃຫ້ບັນລຸຕາມລະດັບຄາດໝາຍທີ່ວາງໄວ້.

(ນາລີວັນ)



# ສພຂ ຄໍາມ່ວນ ກະກຽມຄວາມພ້ອມດໍາເນີນກອງປະຊຸມສະໄໝສາມັນເທື່ອທີ 3



(ສພຊ) ໃນວັນທີ 12 ສິງຫາ 2022 ທີ່ຫ້ອງປະຊຸມຫ້ອງວ່າການແຂວງຄໍາມ່ວນ ໄດ້ມີກອງປະຊຸມລະຫວ່າງຄະນະປະຈໍາສະພາປະຊາຊົນແຂວງ(ສພຂ) ແລະ ອົງການປົກຄອງແຂວງຄໍາມ່ວນ ເພື່ອກະກຽມຄວາມພ້ອມໃຫ້ແກ່ການດໍາເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຄໍາມ່ວນ ຊຸດທີ II ໂດຍການເປັນປະທານຮ່ວມຂອງທ່ານ ວັນໄຊ ພອງສະຫວັນ ເຈົ້າແຂວງຄໍາມ່ວນ ແລະ ທ່ານ ບຸນມີ ພິມມະສອນ ປະທານ ສພຂ ຄໍາມ່ວນ, ມີບັນດາຄະນະປະຈໍາສະພາ ແລະ ອົງການປົກຄອງແຂວງເຂົ້າຮ່ວມ.

ທັງນີ້, ກໍເພື່ອຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງປີ 2020) ກ່ຽວກັບການກະກຽມ ແລະ ຮຽກໂຮມກອງປະຊຸມສະພາປະຊາຊົນຂັ້ນແຂວງ ແນໃສ່ຮັບປະກັນໃຫ້ການພິຈາລະນາ, ຮັບຮອງເອົາບັນຫາສໍາຄັນພື້ນຖານຂອງແຂວງ, ການສ້າງ ແລະ ປັບປຸງນິຕິກໍາ, ຜົນການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທໍາມະນູນ ແລະ ກົດໝາຍຂອງບັນດາອົງການອໍານາດລັດຂັ້ນແຂວງ ຢູ່ໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ ໃຫ້ມີຄຸນນະພາບສູງ, ສອດຄ່ອງຕາມແນວທາງນະໂຍບາຍຂອງພັກ, ກົມກຽວກັບນິຕິກໍາທີ່ກ່ຽວຂ້ອງຂອງອົງການບໍລິຫານລັດຂັ້ນທ້ອງຖິ່ນ ທັງສາມາດຮັບປະກັນການເຊື່ອມໂຍງກັບພາຍໃນ ແລະ ຕ່າງປະເທດ, ເພື່ອປະຕິບັດພາລະບົດບາດຂອງສະມາຊິກສະພາປະຊາຊົນຂັ້ນແຂວງ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ວ່າດ້ວຍສະພາປະຊາຊົນຂັ້ນແຂວງກ່ຽວກັບສິດ ແລະ ໜ້າທີ່ຂອງສະມາຊິກສະພາປະຊາຊົນຂັ້ນແຂວງ ໃຫ້ຮັບປະກັນແກ່ການພິຈາລະນາ, ຮັບຮອງເອົາບັນຫາຕ່າງໆ ໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ ບັນລຸຜົນສໍາເລັດໄດ້ເປັນຢ່າງດີ.

ໃນໂອກາດນີ້, ບັນດາທ່ານທີ່ເຂົ້າຮ່ວມໄດ້ຮັບຟັງການລາຍງານໂດຍຫຍໍ້ກ່ຽວກັບແຜນການທ້າງຫາກະກຽມຄວາມພ້ອມໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງຄໍາມ່ວນຊຸດທີ II. ພ້ອມນັ້ນ, ກອງປະຊຸມຍັງໄດ້ແລກປ່ຽນຄວາມຄິດເຫັນຮ່ວມກັນ ເພື່ອປຶກສາຫາລືກ່ຽວກັບເນື້ອໃນດ້ານຕ່າງໆ ທີ່ສະພາປະຊາຊົນແຂວງໄດ້ກໍານົດໄວ້ ໃຫ້ກັບບັນດາພາກສ່ວນອົງການປົກຄອງແຂວງ ໄດ້ນໍາສະເໜີຊີ້ແຈງ ແລະ ຕອບຂໍ້ຊັກຖາມ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງຄໍາມ່ວນ ຊຸດທີ II.

(ເອື້ອ ມະໂນສິງ)

# ປະທານ ສພຂ ເຄື່ອນໄຫວວຽກງານຢູ່ກອງຮ້ອຍຊາຍແດນ 221 ແລະ ດ່ານສາກົນນໍ້າກັ່ນ



(ສພຊ) ໃນວັນທີ 9 ສິງຫາ 2022 ທ່ານ ບຸນໂຮມ ເທດທານີ ປະທານສະພາປະຊາຊົນແຂວງ (ສພຂ) ຊຽງຂວາງ ພ້ອມດ້ວຍຄະນະ ເຄື່ອນໄຫວຊຸກຍູ້ວຽກງານຢູ່ກອງຮ້ອຍຊາຍແດນ 221 ແລະ ດ່ານສາກົນນໍ້າກັ່ນ ມີບັນດາທ່ານສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ ປະຈໍາເມືອງໜອງແຮດ, ຄະນະເລຂາທິການ, ກໍາລັງຂອງກອງຮ້ອຍຊາຍແດນ 221 ແລະ ພະນັກງານປະຈໍາດ່ານສາກົນນໍ້າກັ່ນເຂົ້າຮ່ວມ.

ໃນໂອກາດນີ້, ຍັງໄດ້ຮັບຟັງການລາຍງານຂອງທ່ານ ຮອ. ກູ້ຢ່າ ລີຟູ ຫົວໜ້າກອງຮ້ອຍຊາຍແດນ 221 ກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ເປັນກໍາລັງຕົ້ນໃນການຄຸ້ມຄອງ, ປົກປັກຮັກສາເສັ້ນຊາຍແດນ, ຫລັກໝາຍຊາຍແດນແຫ່ງຊາດ,ເຄື່ອງໝາຍຊີ້ບອກເສັ້ນຊາຍແດນ, ເຂດຫວງຫ້າມ, ບັນດາແຫລ່ງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເປັນກໍາລັງຈັ້ງທ່າຢູ່ດ້ານໜ້າ ເພື່ອສ້າງເງື່ອນໄຂໃຫ້ກໍາລັງທ້ອງຖິ່ນ ແລະ ໄດ້ຮັບຟັງການລາຍງານຂອງທ່ານ ພັທ. ແພງວັນ ເພັດວົງກົດ ຫົວໜ້າດ່ານສາກົນນໍ້າກັ່ນ ກ່ຽວກັບການເຄື່ອນໄຫວວຽກງານ ໃນໄລຍະຜ່ານມາ ເປັນຕົ້ນແມ່ນເອົາໃຈໃສ່ກວດກາຄົນ, ພາຫະນະ, ສິນຄ້າເຂົ້າ-ອອກໃຫ້ຖືກຕ້ອງຕາມລະບຽບການ, ໄດ້ສົມທົບກັບເຈົ້າໜ້າທີ່ ພາກສ່ວນກ່ຽວຂ້ອງຕິດຕາມກວດກາບຸກຄົນ ແລະ ກຸ່ມຄົນທີ່ບໍ່ຫວັງດີ, ພ້ອມກັນເປັນເຈົ້າການໃນການປະຕິບັດໜ້າທີ່ວຽກງານຂອງຕົນ.

ໃນຕອນທ້າຍ, ທ່ານ ບຸນໂຮມ ເທດທານີ ຍັງໄດ້ໂອ້ລົມຕໍ່ກັບພະນັກງານ ໃຫ້ທຸກທ່ານຈົ່ງພ້ອມກັນເອົາໃຈໃສ່ປະຕິບັດໜ້າທີ່ວຽກງານດ້ວຍຄວາມຮັບຜິດຊອບສູງ ຮັບປະກັນໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ຖືກຕ້ອງສອດຄ່ອງກັບລະບຽບກົດໝາຍ ແລະ ບັນຫາທີ່ຍັງມີຄວາມຫຍຸ້ງຍາກ ທີ່ກ່ຽວຂ້ອງກັບຂັ້ນເທິງແມ່ນຈະນໍາໄປພິຈາລະນາ, ແກ້ໄຂໃຫ້ທວງທັນກັບເວລາ, ແທດເໝາະຕາມສະພາບຄວາມເປັນຈິງ.

ໂອກາດດັ່ງກ່າວ, ຍັງໄດ້ນໍາເອົາເຄື່ອງຊ່ວຍເຫລືອມີເກີບ, ແຈວລ້າງມື້, ຜ້າປິດປາກມອບໃຫ້ກອງຮ້ອຍຊາຍແດນ ແລະ ຄອມພິວເຕີໂນດບຸກ 1 ໜ່ວຍ, ໂທລະໂຄ່ງ 1 ຊຸດ ມອບໃຫ້ດ່ານສາກົນນໍ້າກັ່ນ ລວມມູນຄ່າ 19 ລ້ານກວ່າກີບ ເພື່ອປະກອບສ່ວນເຂົ້າໃນວຽກງານຂອງສອງພາກສ່ວນ.

(ບຸນສີ ສິດທິເດດ)

# ມອບເຄື່ອງຊ່ວຍເຫລືອບັນເທົາທຸກ ໃຫ້ປະຊາຊົນຜູ້ປະສົບໄພນໍ້າຖ້ວມທີ່ເມືອງທ່າປາງທອງ



(ສພຊ) ໃນວັນທີ 11 ສິງຫາ 2022 ຄະນະຈໍາສະພາປະຊາຊົນແຂວງ (ຄປຈ.ສພຂ) ສະຫວັນນະເຂດ ເຊິ່ງນໍາໂດຍທ່ານ ຄໍາຜັນ ຄູນສະຫວັນ ຮອງປະທານ ຄປຈ.ສພຂ, ສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ໄດ້ເຄື່ອນໄຫວຕິດຕາມສະພາບນໍ້າຖ້ວມ ແລະ ບ້ານທີ່ຖືກຜົນກະທົບຂອງເມືອງທ່າປາງທອງ ໂດຍການຕ້ອນຮັບຂອງທ່ານ ຄໍາປະສົງ ຂົງຄໍາ ເຈົ້າເມືອງໆທ່າປາງທອງ.

ໂອກາດດັ່ງດ່າວ, ໄດ້ຮັບຟັງການລາຍ ໂດຍສັງເຂບຈາກທ່ານ ບຸນຍົງ ຍົດສີຟອງ ຮອງເຈົ້າເມືອງເມືອງໆທ່າປາງທອງ ໄດ້ລາຍງານໃຫ້ຮູ້ວ່າໃນໄລຍະແຕ່ວັນທີ 6-9 ສິງຫາ 2022 ຢູ່ເມືອງທ່າປາງທອງ ໄດ້ເກີດມີສະພາບຝົນຕົກຕິດຕໍ່ກັນເຮັດໃຫ້ເກີດມີນໍ້າຂັງ ແລະ ຖ້ວມບ້ານເຮືອນ ລວມທັງເນື້ອທີ່ທໍາການຜະລິດຂອງພໍ່ແມ່ປະຊາຊົນຈໍານວນໜຶ່ງ ຕາມສາຍນໍ້າເຊປ໋ອງ ຕໍ່ກັບສະພາບການດັ່ງກ່າວ ການນໍາຂອງເມືອງພ້ອມດ້ວຍຄະນະກໍາມະການຕ້ານໄພພິບັດຂັ້ນເມືອງ ໄດ້ລົງຕິດຕາມສະພາບນໍ້າຖ້ວມຢູ່ບ້ານທີ່ໄດ້ຮັບຜົນກະທົບ ແລະ ໄດ້ນໍາໃຊ້ກໍາລັງທະຫານ, ຕໍາຫລວດ, ພະນັກງານ-ລັດຖະກອນ ສຸມໃສ່ໃຫ້ການຊ່ວຍເຫລືອພໍ່ແມ່ປະຊາຊົນເຮັດໃຫ້ມີຄວາມປອດໄພໂດຍພື້ນຖານ ປັດຈຸບັນສະພາບນໍ້າຢູ່ໃນເກນປົກກະຕິ. ຜ່ານການເກັບກໍາຂໍ້ມູນເບື້ອງຕົ້ນ ບ້ານທີ່ໄດ້ຮັບຜົນກະທົບທັງຫມົດ 10 ບ້ານ; ບ້ານ ແລະ ຄອບຄົວທີ່ໄດ້ຮັບຜົນກະທົບຫນັກຈາກໄພນໍ້າຖ້ວມ ບ້ານຫ້ວຍໝື່ນ ຖ້ວມເຮືອນ 35 ຫລັງ, ເລົ້າເຂົ້າ 22 ຫລັງ (ໄຫລ 1 ຫລັງ), ວິດຖ່າຍ 30 ຫົວ, ນໍ້າບາດານ 3 1 ບໍ່, ໜອງປາ ແລະ ເນື້ອທີ່ນາຈໍານວນໜຶ່ງ; ບ້ານກຸດຮີ (ຄຸ້ມກຸດສໍາພັນ ), ຖ້ວມເຮືອນ 15 ຫລັງ, ວັດ 1 ແຫ່ງ, ໜອງປາ ແລະ ເນື້ອທີ່ນາຈໍານວນໜຶ່ງ; ບ້ານທ່າສະລາຄໍາ ຖ້ວມເຮືອນ 19 ຫລັງ, ບ້ານພັກ 1 ຫລັງ; ບ້ານໂນນຈານ, ບ້ານໜອງກັນ, ບ້ານນາຫົວຄວາຍ, ບ້ານພູແສງຄໍາ, ບ້ານໃໝ່ໂພສີ (ຄຸ້ມໃໝ່ເຊ) ບ້ານທົ່ງປາງ ແລະ ບ້ານບຸດຕະພານ ຖ້ວມເນື້ອທີ່ນາ, ໜອງປາ, ຝາຍລວມ ແລະ ພື້ນຖານໂຄງລ່າງຈໍານວນໜຶ່ງ. ດ້ານພື້ນຖານໂຄງລ່າງ: ມີຫົວຂົວຂາດ, ຊຸດ ແລະເປ່ເພຈໍານວນ 4 ແຫ່ງ ໃນນັ້ນ, ຫົວຂົວຂາດ 1 ແຫ່ງ (ຂົວແກ້ງແກບ ຢູ່ເສັ້ນທາງເລກທີ 2.6313 ຈຸດກິໂລແມັດທີ 36 ມີ 11 ແຫ່ງ); ຂົວເບເລ ຊຸດມີ 2 ແຫ່ງ (ຂົວເບເລ ບ້ານທ່າສະລາຄໍາ 1 ແຫ່ງ ແລະ ຂົວເບຕົງບ້ານຫ້ວຍໝື່ນຢູ່ເສັ້ນທາງ 2.63 13 ຈຸດກິໂລແມັດທີ 42) ແລະ ເປ່ເພຫນັກ 1 ແຫ່ງ (ຂົວເບເລບ້ານຫ້ວຍໝື່ນ) ບໍ່ສາມາດທຽວໄດ້, ໄດ້ຊຸກຍູ້ໃຫ້ອໍານາດການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນ ຢູ່ໃນເຂດທີ່ມີຄວາມສ່ຽງ ຍົກຍ້າຍຜູ້ຄົນ, ສິ່ງຂອງ ແລະ ສັດລ້ຽງໄປຢູ່ຈຸດທີ່ສູງ, ເສັ້ນທາງຄົມມະນາຄົມ ແລະ ດ້ານຜົນເສຍຫາຍອື່ນໆ ຍັງບໍ່ທັນສາມາດປະເມີນໄດ້ ແລະ ລາຍງານໃຫ້ທ່ານຮັບຊາບຕາມພາຍຫລັງ. ຈາກນັ້ນ, ໄດ້ຕິດຕາມຊຸກຍູ້ອໍານາດການປົກຄອງ ພ້ອມທັງລົງເບິ່ງຈຸດສະຖານທີ່ໆໄດ້ຮັບຜົນກະທົບ ແລະ ເສຍຫາຍຕາມຈຸດຕ່າງໆຕໍ່ສະພາບການດັ່ງກ່າວ ຄະນະການນໍາຂອງສະພາປະຊາຊົນແຂວງ ໄດ້ມອບເຄື່ອງເຫລືອໃຫ້ເມືອງເພື່ອນໍາໄປມອບ ແລະ ແຈກຢາຍໃຫ້ຄອບຄົວທີ່ໄດ້ຮັບຜົນກະທົບຈາກເຫດການດັ່ງກ່າວ.

ເຄື່ອງທີ່ນໍາມາມອບໃນຄັ້ງນີ, ປະກອບມີ: ນໍ້າດື່ມ 100 ແພັກ, ໝີ່ 15 ແກັດ, ປາກະປ໋ອງ 3 ແກັດ ໂດຍຕາງໜ້າມອບໂດຍທ່ານ ຄໍາຜັນ ຄູນສະຫວັນ ຮອງປະທານ ສພຂ ສະຫວັນນະເຂດ ຕາງໜ້າຮັບຂອງທ່ານ ຄໍາປະສົງ ຂົງຄໍາ ເຈົ້າເມືອງໆທ່າປາງທອງ.

# ສະຫລຸບຖອດຖອນບົດຮຽນການກະກຽມ ແລະ ດໍາເນີນກອງປະຊຸມສະໄໝສາມັນເທື່ອທີ 3



(ສພຊ) ສະພາປະຊາຊົນແຂວງ (ສພຂ) ສາລະວັນ ໄດ້ສະຫລຸບຖອດຖອນບົດຮຽນການກະກຽມ ແລະດໍາເນີນກອງປະຊຸມສະໄໝສາມັນ 3 ຂອງສະພາປະຊາຊົນແຂວງ ທີ່ໄດ້ສໍາເລັດລົງໃນໄລຍະຜ່ານມາ ເຊິ່ງໃນກອງປະຊຸມໄດ້ຮັບຟັງການລາຍງານຮ່າງບົດສະຫລຸບຕີລາຄາຜົນສໍາເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຊຸດທີ II ຈາກຮອງເລຂາທິການ ສພຂ ເຊິ່ງຍົກໃຫ້ເຫັນດ້ານດີ ຜົນງານ, ດ້ານຄົງຄ້າງ ເຊັ່ນ ການກະກຽມເນື້ອໃນກ່ອນການດໍາເນີນກອງປະຊຸມ, ການບໍລິການຮັບໃຊ້ ໃນໄລຍະດໍາເນີນກອງປະຊຸມ. ຈາກນັ້ນ, ບັນດາຜູ້ແທນກອງປະຊຸມໄດ້ຜັດປ່ຽນກັນປະກອບຄໍາຄິດຄໍາເຫັນຕາມຄໍາເຈາະຈີ້ມຂອງປະທານກອງປະຊຸມໃສ່ຮ່າງບົດລາຍງານດັ່ງກ່າວ ເພື່ອເຮັດໃຫ້ມີເນື້ອໃນຄົບຖ້ວນສົມບູນ ແລະ ສາມາດເປັນບ່ອນອີງໃນຕໍ່ໜ້າ.

ທັງນີ້, ກໍເພື່ອເປັນການທົບທວນຄືນໃນການຈັດຕັ້ງປະຕິບັດບັນດາໜ້າວຽກການກະກຽມແຕ່ຫົວທີກ່ອນການດໍາເນີນ ແລະ ຈົນຮອດມື້ດໍາເນີນກອງປະຊຸມ; ແລກປ່ຽນບົດຮຽນເຊິ່ງກັນແລະກັນ ຢ່າງກົງໄປກົງມາ ເພື່ອນໍາໄປປັບປຸງ ໃນການກະກຽມກອງປະຊຸມສະໄໝສາມັນຂອງ ສພຂ ຄັ້ງຕໍ່ໄປ ໃຫ້ມີຄຸນນະພາບດີຂຶ້ນກວ່າເກົ່າ.

ໂອກາດນີ້, ປະທານກອງປະຊຸມ ໄດ້ໜັກໃຫ້ຄະນະກໍາມະການ, ຄະນະເລຂາທິການ ຈົ່ງເຂັ້ມງວດປະຕິບັດລະບອບກອງປະຊຸມໃຫ້ເປັນປົກກະຕິ ໃນແຕ່ລະເດືອນ ຕາມກົດໝາຍກໍານົດ ເພື່ອພ້ອມກັນກວດກາບັນດາວຽກງານສໍາຄັນທີ່ຢູ່ໃນຄວາມຮັບຜິດຊອບ, ຖືສໍາຄັນເນື້ອໃນກອງປະຊຸມສາມັນຕ້ອງຊັດເຈນຈະແຈ້ງ, ມີແຜນການປະສານງານຢ່າງເປັນລະບົບກັບພະແນກການຕາມຂົງເຂດຄວາມຮັບຜິດຊອບ ເພື່ອປຶກສາຫາລືຄວາມເປັນເອກະພາບດ້ານເນື້ອໃນກ່ອນການດໍາເນີນກອງປະຊຸມ; ລິເລີ່ມແຕ່ຫົວທີສ້າງແຜນງົບປະມານຮັບໃຊ້, ທັງດ້ານພິທີການໃຫ້ມີຄວາມຈົບງາມເປັນລະບຽບຮຽບຮ້ອຍ.

ກອງປະຊຸມຄັ້ງນີ້, ຈັດຂຶ້ນໃນວັນທີ 11 ສິງຫາ 2022 ທີ່ຫ້ອງປະຊຸມ ສພຂ ໂດຍການເປັນປະທານຂອງທ່ານສີເຮັງ ຫອມສົມບັດ ປະທານ ສພຂ, ມີ ທ່ານ ຂັນໄຊ ລັດຖະເຮົ້າ ຄະນະປະຈໍາພັກແຂວງ ຮອງປະທານ ສພຂ, ມີຄະນະປະຈໍາ, ຄະນະກໍາມະການ, ຄະນະເລຂາທິການ, ພະນັກງານ-ລັດຖະກອນເຂົ້າຮ່ວມ.

(ນາງ ຄັດສອນ ຮຸ່ງສະຫວ່າງ)

108 ສາລະ

# ຫລັກການຄວາມເປັນກົດໝາຍສູງສຸດຂອງລັດຖະທຳມະນູນ

**ໂດຍ: ວິລະວົງ ຍຸບົນພາກ**

ຕາມທັດສະນະຂອງຜູ້ຂຽນທີ່ຢາກນຳສະເໜີ ເພື່ອແລກປ່ຽນກັບບັນດາທ່ານຜູ້ອ່ານ ກ່ຽວກັບຄວາມໝາຍທີ່ວ່າ ຕາມກົດໝາຍວ່າດ້ວຍການສ້າງນິຕິກຳ ໄດ້ຈັດລຳດັບນິຕິກຳໂດຍເອົາລັດຖະທຳມະນູນໄວ້ອັນດັບໜຶ່ງ ມັນກຳໝາຍຄວາມວ່າເປັນນິຕິກຳສູງສຸດ ແລະ ກົດໝາຍພື້ນຖານຂອງລັດ ແຫ່ງ ສປປລາວ ສະແດງເຖິງເຈດຈຳນົງຂອງຊົນຊັ້ນປົກຄອງ, ກຳນົດລະບອບການເມືອງ, ເສດຖະກິດ, ສັງຄົມ, ສິດ ແລະ ພັນທະພື້ນຖານຂອງພົນລະເມືອງ, ຫລັກການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົງຈັກລັດ.

ຄວາມເປັນກົດໝາຍສູງສຸດຂອງລັດຖະທຳມະນູນ ໝາຍຄວາມວ່າ ລັດຖະທຳມະນູນ ໄດ້ຮັບການຍອມຮັບວ່າເປັນກົດໝາຍທີ່ຢູ່ໃນລຳດັບສູງສຸດໃນລະບົບກົດໝາຍຂອງລັດ ແລະ ໃນກໍລະນີທີ່ມີຄວາມບໍ່ສອດຄ່ອງກັນລະຫວ່າງ ລັດຖະທຳມະນູນ ແລະ ກົດໝາຍນັ້ນ ລັດຖະທຳມະນູນ ຕ້ອງຢູ່ໃນຖານະທີ່ມາກ່ອນ ເຊິ່ງມີຜົນເຮັດໃຫ້ກົດໝາຍທີ່ບໍ່ສອດຄ່ອງກັບລັດຖະທຳມະນູນນັ້ນ ຕົກເປັນໂມຄະ ຫລື ບໍ່ສາມາດຈັດຕັ້ງປະຕິບັດໄດ້.




ສຳລັບປະເທດທີ່ມີລັດຖະທຳມະນູນເປັນລາຍລັກອັກສອນ ຈະເປັນທີ່ຍອມຮັບກັນໂດຍທົ່ວໄປວ່າ ລັດຖະທຳມະນູນ ຖືເປັນກົດໝາຍໃນລຳດັບຊັ້ນສູງສຸດ ໝາຍຄວາມວ່າ ມີສະຖານະສູງກວ່າກົດໝາຍອື່ນ ເຊິ່ງກົດໝາຍນັ້ນບໍ່ສາມາດຂັດແຍ່ງກັບລັດຖະທຳມະນູນໄດ້. ຄວາມເປັນກົດໝາຍສູງສຸດໃນພາສາອັງກິດໃຊ້ຄຳວ່າ Supremacy of the Law ຄື ສະຖານະສູງສຸດຂອງກົດໝາຍ ເຊິ່ງສະແດງໃຫ້ເຫັນເຖິງສະຖານະຂອງກົດໝາຍນັ້ນໆ ວ່າຢູ່ໃນລຳດັບສູງກວ່າກົດໝາຍທັງໝົດ ຈຶ່ງມີການເອີ້ນວ່າ ລຳດັບ ຫລື ຊັ້ນຂອງກົດໝາຍ (Hierarchy).

ວິທີການທີ່ສາມາດສະແດງໃຫ້ຮັບຮູ້ ຫລື ສັງເກດໄດ້ວ່າ ລັດຖະທຳມະນູນເປັນກົດໝາຍສູງສຸດ ນັ້ນກໍຄື ການບັນຍັດວ່າ ກົດໝາຍໃດທີ່ບໍ່ສອດຄ່ອງກັບລັດຖະທຳມະນູນ ແມ່ນບໍ່ສາມາດຈັດຕັ້ງປະຕິບັດໄດ້.

ຫລັກການຄວາມເປັນກົດໝາຍສູງສຸດຂອງລັດຖະທຳມະນູນ ມີຄວາມສຳຄັນຫລາຍ ໃນລະບອບປະຊາທິປະໄຕ ປະຊາຊົນຂອງພວກເຮົາ ເນື່ອງຈາກລັດຖະທຳມະນູນເປັນກົດໝາຍສູງສຸດ ເຊິ່ງສະແດງໃຫ້ເຫັນເຖິງການນຳໃຊ້ອຳນາດຂອງປະຊາຊົນຢ່າງເຕັມຮູບແບບ ເປັນອຳນາດອະທິປະໄຕຂອງລັດ ພ້ອມທັງເປັນຫລັກປະກັນສິດປະຊາທິປະໄຕ ແລະ ເສລີພາບຂອງປະຊາຊົນລາວບັນດາເຜົ່າ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ. ຖ້າມີບົດບັນຍັດຂອງກົດໝາຍໃດ ຫາກບໍ່ສອດຄ່ອງກັບບົດບັນຍັດຂອງລັດຖະທຳມະນູນທີ່ເປັນກົດໝາຍສູງສຸດ ນັ້ນກໍໝາຍຄວາມວ່າ ບົດບັນຍັດນັ້ນຂັດກັບຫລັກການທີ່ວ່າ ອຳນາດທັງໝົດເປັນຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນ ແລະ ຫລັກການປົກປ້ອງສິດ ແລະ ເສລີພາບຂອງພົນລະເມືອງ ຈະຖືກລະເມີດ.

ລັດຖະທຳມະນູນແຫ່ງ ສປປລາວ (ສະບັບປັບປຸງ 2015) ມາດຕາ 117 ວັກ 1 ກຳນົດວ່າ "ລັດຖະທຳມະນູນ ແຫ່ງ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ແມ່ນກົດໝາຍພື້ນຖານຂອງຊາດ" ພ້ອມດຽວກັນ ໃນວັກ 2 ຂອງມາດຕາດັ່ງກ່າວ ຍັງກຳນົດອີກວ່າ "ທຸກກົດໝາຍຕ້ອງໃຫ້ສອດຄ່ອງກັບລັດຖະທຳມະນູນ" ເຊິ່ງເປັນບົດບັນຍັດທີ່ສະທ້ອນໃຫ້ເຫັນເຖິງຫລັກການຄວາມເປັນກົດໝາຍສູງສຸດຂອງລັດຖະທຳມະນູນ ແລະ ມີອົງການທີ່ປະຕິບັດໜ້າທີ່ ໃນການຄວບຄຸມບົດບັນຍັດແຫ່ງກົດໝາຍ ບໍ່ໃຫ້ຂັດກັບບົດບັນຍັດຂອງລັດຖະທຳມະນູນ ນັ້ນກໍຄື ສະພາແຫ່ງຊາດ ທີ່ມີພາລະບົດບາດໃນການຕິດຕາມກວດກາການເຄົາລົບ, ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ຂອງບັນດາອົງການລັດນັ້ນເອງ.

ສາລາກະວີ

# ເມື່ອອຳນາດໃໝ່ມາມື

**# ໂດຍ: ຊຽງເອງ**

❈ ຍຶດອຳນາດຂາດຂັ້ນ ມາຢູ່ໃນມື ແລ້ວນັ້ນ
ທີ 23 ສິງຫາ ລືກ່ຽງມໄຊກ້າ
ປວງປະຊາຊາວເຊື້ອ ດີໃຈຊົມຊື່ນ
ເມື່ອຫລຸດພົ້ນຜ່ານຂ້າມ ເມືອງຂຶ້ນຕ່າງແດນ

❈ ແສນເດືອດຮ້ອນ ທົນທຸກທໍລະມານ ຄາວນັ້ນ!
ປະຕິການ ລູກມືເມືອງຂຶ້ນ
ເລ່ກົນຮ້າຍ ທຳລາຍຜູ້ຄິດຕ່າງ
ດາບຢູ່ເໜືອຄໍຢູ່ໃຕ້ ປະຊາທິປະໄຕແອບອ້າງ ວາງໄວ້ເພື່ອລວງ

❈ ແມ້ງເມື່ອອຳນາດເຂົ້າ ເນົາຢູ່ມືປະຊາ ເຮົານັ້ນ!
ໝັ່ນຮັກສາດູແລ ໃຫ້ແກ່ນຄົງແຂງກ້າ
ເປັນເຄື່ອງມືຄົມກ້າ ຜະເດັດການກຳມະຊົບ
ປາບປາມມານໝູ່ຮ້າຍ ໃຫ້ຫາຍສິ້ນຈາກແຜ່ນດິນ

❈ ຢ່າໃຫ້ອາຍກິ່ນຮ້າຍ ລະບອບເນົ່າປະຕິການ
ສິ່ງກິ່ນເໝັນຄືນມາ ກີດຂວາງຄວາມກ້າວ
ສໍ້ລາດບັງຫລວງນັ້ນ ພັນທຸກຳລະບອບເກົ່າ
ຕ້ອງເອົາມັນມອດມ້ຽນ ຕາຍພ້ອມລະບອບຫລັງ

❈ ທຸກຢ່າງເຮັດໃຫ້ໄດ້ ຄືດັ່ງປະຕິຍານ
ຊື່ສັດບໍລິສຸດ ໂປ່ງໃສຈະແຈ້ງ
ສາມັກຄີຄືເສົາຄ້ຳ ເປັນໃຈດຽວເດັດດ່ຽວ
ພັກນຳພາ-ລັດຄຸ້ມຄອງຍຶດໝັ້ນ ເດີນໜ້າພັດທະນາ

❈ ສ້າງໃຫ້ດິນຖິ່ນນີ້ ເຮືອງຮຸ່ງສີວິໄລ
ກ້າວດຸ່ງໄປຕາມຍຸກ ພັດທະນານຳໜ້າ
ສົມວ່າລາວເປັນເຈົ້າ ດິນແດນເອກະລາດ
ລຶບລ້າງຄວາມທຸກໄຮ້ ມໍລະດົກຊົ່ວຮ້າຍ ນາຍເມືອງຂຶ້ນເຮັດມາ

❈ ຂໍຈົ່ງເປືອງປິ່ນໜ້າ ໃຈໃສ່ສາມັກຄີ
ເພີ່ມທະວີກຳລັງແຮງ ແກ່ນແຂງຂານສູ້
ອຳນາດໃນມືແລ້ວ ກະທຳການເດັດດ່ຽວ
ສ້າງດິນແດນຖິ່ນນີ້ ໃຫ້ທຽມເທົ້າຖິ່ນຈະເລີນ ແທ້ເດີ!



ສຸກສະບາຍຫາຍໂລຄາ

# ສັນຍາອັນຕະລາຍ ສ່ຽງຫົວໃຈວາຍ

**ແປ ແລະ ຮຽບຮຽງໂດຍ: ສາວແວ່ນ**



ອາການຫົວໃຈວາຍ ຫລືຫົວໃຈລົ້ມເຫລວເກີດຈາກການເຮັດວຽກຜິດປົກກະຕິຂອງຫົວໃຈ ພາໃຫ້ບໍ່ສາມາດສູບເລືອດໄປລ້ຽງສ່ວນຕ່າງໆໄດ້ພຽງພໍ ຄວາມຮຸນແຮງມີທັງແບບກະທັນຫັນ ແລະ ຊຳເຮື້ອ ດັ່ງນັ້ນ, ສິ່ງສຳຄັນຄວນຈະສັງເກດອາການ ເພາະຫົວໃຈເປັນອະໄວຍະວະທີ່ເມື່ອເຈັບປ່ວຍແລ້ວລໍຖ້າບໍ່ໄດ້ ການຮູ້ໄວກໍຈະຊ່ວຍໃຫ້ດູແລຮັກສາໄດ້ຢ່າງຖືກຕ້ອງ ແລະ ຫລຸດຄວາມສ່ຽງຕໍ່ການເສຍຊີວິດຍ້ອນຫົວໃຈວາຍໄດ້ຫລາຍຂຶ້ນ.

ພະຍາດຫົວໃຈວາຍ ອາດເກີດໄດ້ຈາກຫລາຍສາເຫດ ເຊັ່ນ: ເສັ້ນເລືອດຫົວໃຈຕີບ ຫລືຕັນແບບກະທັນຫັນ ຈຶ່ງເຮັດໃຫ້ກ້າມເນື້ອຫົວໃຈຕາຍ ສົ່ງຜົນໃຫ້ການບີບໂຕຂອງຫົວໃຈຫລຸດລົງ; ລິ້ນຫົວໃຈຜິດປົກກະຕິ ເຊັ່ນ: ເສັ້ນເລືອດຫົວໃຈຕີບຮຸນແຮງ ເຮັດໃຫ້ການຮັບ-ສົ່ງເລືອດຂອງຫົວໃຈຫລຸດລົງ; ກຸ່ມພະຍາດໄທລອຍ ເຊັ່ນ: ໄທລອຍເປັນພິດ ແລະ ແມ່ຍິງທີ່ມີອາການຕັ້ງຄັນ (ຖືພາ) ເປັນພິດ; ສະນັ້ນ, ໃນຄໍລຳສຸກສະບາຍຫາຍໂລຄາສະບັບນີ້ ເຮົາມີ 3 ອາການທີ່ອາດຈະເປັນສັນຍານເຕືອນວ່າ ຫົວໃຈຂອງທ່ານກຳລັງຈະວາຍ ຫລື ລົ້ມເຫລວ ດັ່ງນີ້:

- **ເມື່ອຍງ່າຍ:** ອາດຈະບົ່ງບອກວ່າ ປະສິດທິພາບການເຮັດວຽກຂອງຫົວໃຈໜ້ອຍລົງ ຄວາມຮຸນແຮງຂອງພະຍາດມັກຈະກ່ຽວຂ້ອງກັບກິດຈະກຳທີ່ປະຕິບັດ ຖ້າທ່ານມີອາການເມື່ອຍຢູ່ຕະຫລອດເວລາ ນັ້ນອາດໝາຍເຖິງຄວາມຜິດປົກກະຕິທີ່ຮຸນແຮງ.

- **ແສບ, ເຈັບສຽບ ແລະ ແໜ້ນໜ້າເອິກ:** ອາການນັ້ນ ອາດບົ່ງບອກໃຫ້ຮູ້ວ່າ ຫົວໃຈຂາດເລືອດໄປຫລໍ່ລ້ຽງ ສ່ວນຫລາຍມັກຈະຮູ້ສຶກແໜ້ນກາງໜ້າເອິກ ອາດຈະມີອາການປວດຈາກຕົ້ນຄໍຂຶ້ນໄປຫາຄາງກະໄຕ, ມີອາການເຄັ່ງຕຶງ, ມຶນຊາ, ແຕ່ບ່າໄຫລໄປເຖິງຕົ້ນແຂນ ຮູ້ສຶກຄືມີແນວໜັກໆມາເຕັງ ຖ້າອາການເຫລົ່ານີ້ເປັນດົນກວ່າ 20 ນາທີ ອາດສົ່ງຜົນໃຫ້ກ້າມເນື້ອຫົວໃຈຕາຍ ເຮັດໃຫ້ປະສິດທິພາບຂອງຫົວໃຈຫລຸດລົງ.

- **ບໍ່ສະບາຍໂຕເວລານອນ:** ຈະຮູ້ສຶກບໍ່ສະບາຍໂຕເວລານອນຫງາຍ ອາດຈະເປັນສັນຍານທີ່ບົ່ງບອກວ່າປະລິມານນ້ຳໃນຫົວໃຈເພີ່ມຂຶ້ນຈາກການເຮັດວຽກຂອງຫົວໃຈຜິດປົກກະຕິຂ້ອນຂ້າງຮຸນແຮງ.

www.sanook.com

# ກົດໝາຍວ່າດ້ວຍລັດຖະບານ (ສະບັບປັບປຸງ)

ຕໍ່ຈາກສະບັບກ່ອນ...

## ໝວດທີ 6
## ກອງປະຊຸມລັດຖະບານ

**ມາດຕາ 23 (ປັບປຸງ) ກອງປະຊຸມລັດຖະບານ**

- ກອງປະຊຸມລັດຖະບານ ເປີດຂຶ້ນເດືອນລະເທື່ອ ໂດຍແມ່ນນາຍົກລັດຖະມົນຕີເປັນຜູ້ຮຽກໂຮມ ແລະ ເປັນປະທານ, ຍົກເວັ້ນກໍລະນີ ປະທານປະເທດເຂົ້າຮ່ວມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ຂອງກົດໝາຍສະບັບນີ້.
- ກອງປະຊຸມລັດຖະບານ ເປີດຂຶ້ນໄດ້ກໍຕໍ່ເມື່ອ ມີສະມາຊິກລັດຖະບານເຂົ້າຮ່ວມຢ່າງໜ້ອຍ ສອງສ່ວນສາມ ຂອງຈຳນວນສະມາຊິກລັດຖະບານ ທັງໝົດ.
- ສະມາຊິກລັດຖະບານ ມີໜ້າທີ່ເຂົ້າຮ່ວມກອງປະຊຸມລັດຖະບານທຸກຄັ້ງ. ນອກຈາກນັ້ນ, ອາດເຊີນຜູ້ຕາງໜ້າຈາກອົງການອື່ນ ທີ່ກ່ຽວຂ້ອງ ເຂົ້າຮ່ວມກອງປະຊຸມລັດຖະບານ ກໍໄດ້. ສຳລັບ ຜູ້ບໍ່ແມ່ນສະມາຊິກລັດຖະບານ ມີສິດປະກອບຄວາມເຫັນ ຕໍ່ກອງປະຊຸມ ແຕ່ບໍ່ມີສິດລົງຄະແນນສຽງ.
- ກອງປະຊຸມລັດຖະບານ ພິຈາລະນາ, ຕົກລົງບັນຫາ ຫຼື ລົງມະຕິ ໂດຍຖືເອົາສຽງສ່ວນຫຼາຍ. ຖ້າຫາກມີສຽງເທົ່າກັນ ໃຫ້ຖືເອົາສຽງຂອງປະທານກອງປະຊຸມ ເປັນອັນຕັດສິນ.
- ໃນກໍລະນີ ມີຄວາມຈຳເປັນ ແລະ ຮີບດ່ວນ ລັດຖະບານ ອາດເປີດກອງປະຊຸມວິສາມັນກໍໄດ້ ຕາມການຕົກລົງຂອງນາຍົກລັດຖະມົນຕີ ຫຼື ຕາມການສະເໜີຂອງສະມາຊິກລັດຖະບານຢ່າງໜ້ອຍໜຶ່ງສ່ວນສາມ ຂອງຈຳນວນສະມາຊິກລັດຖະບານທັງໝົດ ຫຼື ອາດເປີດກອງປະຊຸມ ນາຍົກ-ຮອງນາຍົກ ລັດຖະມົນຕີ ຮ່ວມກັບສະມາຊິກລັດຖະບານຈຳນວນໜຶ່ງທີ່ກ່ຽວຂ້ອງກໍໄດ້ ຕາມການຕົກລົງຂອງນາຍົກລັດຖະມົນຕີ.
- ລັດຖະບານ ຍັງຮຽກໂຮມ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເຂົ້າຮ່ວມປະຊຸມ ປີລະສອງເທື່ອ ເພື່ອຕິດຕາມ, ກວດກາ ແລະ ຊີ້ນຳ ການປະຕິບັດໜ້າທີ່ ຂອງອົງການປົກຄອງທ້ອງຖິ່ນ ຫຼື ອາດເຊີນ ຫົວໜ້າ ຫຼື ປະທານ ຂອງອົງການຈັດຕັ້ງ ພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ເຂົ້າຮ່ວມເພື່ອປະກອບຄຳເຫັນ.

**ມາດຕາ 24 ກອງປະຊຸມພິເສດ**

ກອງປະຊຸມພິເສດ ຂອງລັດຖະບານ ແມ່ນກອງປະຊຸມລັດຖະບານ ໂດຍການຮຽກໂຮມ ແລະ ເປັນປະທານ ຂອງປະທານປະເທດ ຊຶ່ງສາມາດເປີດຂຶ້ນໄດ້ທຸກເວລາ ຫຼື ເມື່ອປະເທດຊາດຕົກຢູ່ໃນສະພາວະວິກິດການຮ້າຍແຮງ ທາງດ້ານເສດຖະກິດ-ສັງຄົມ, ໄພທຳມະຊາດ ຫຼື ໃນສະພາວະສຸກເສີນ ທາງດ້ານການປ້ອງກັນຊາດ-ປ້ອງກັນຄວາມສະ ຫງົບ ແລະ ການຕ່າງປະເທດ.

**ມາດຕາ 25 (ປັບປຸງ) ເນື້ອໃນທີ່ນຳເຂົ້າກອງປະຊຸມ**

ເນື້ອໃນທີ່ນຳເຂົ້າ ພິຈາລະນາ ແລະ ຕົກລົງ ໃນກອງປະຊຸມລັດຖະບານ ມີ ດັ່ງນີ້:

1. ແຜນຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
2. ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາແຫ່ງຊາດ;
3. ຮ່າງກົດໝາຍ, ຮ່າງລັດຖະບັນຍັດ ແລະ ຮ່າງດຳລັດ;
4. ການ ສ້າງຕັ້ງ, ໂຮມ, ແຍກ, ຍຸບເລີກ ກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນ ຫຼວງ ແລະ ເຂດພິເສດ, ການກຳນົດເຂດແດນຂອງແຂວງ, ນະຄອນຫຼວງ ແລະ ເຂດພິເສດ ກ່ອນນຳສະເໜີສະພາແຫ່ງຊາດພິຈາລະນາຮັບຮອງ;
5. ການ ສ້າງຕັ້ງ, ໂຮມ, ແຍກ, ຍຸບເລີກ ບັນດາອົງການຈັດຕັ້ງ ທີ່ຂຶ້ນກັບລັດຖະບານໂດຍກົງ;
6. ການສ້າງຕັ້ງ, ໂຮມ, ແຍກ, ຍຸບເລີກ, ກຳນົດເຂດແດນຂອງ ເມືອງ, ເທດສະບານ, ນະຄອນ;
7. ການ ສ້າງຕັ້ງ ຫຼື ຍຸບເລີກ ເຂດເສດຖະກິດພິເສດ, ໂຄງການລົງທຶນຂະໜາດໃຫຍ່ ທີ່ກ່ຽວຂ້ອງ ກັບຫຼາຍພາກສ່ວນ;
8. ການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ;
9. ເນື້ອໃນ ການເຈລະຈາ, ສົນທິສັນຍາ ແລະ ສັນຍາ ທີ່ຈະເຊັນກັບຕ່າງປະເທດ;
10. ການພິຈາລະນາ ຕົກລົງ ກ່ຽວກັບ ການໃຫ້ສັນຊາດລາວ, ຖອນສັນຊາດລາວ, ປະສັນຊາດລາວ, ການໃຫ້ສັນຊາດລາວຄືນ ແລະ ການເອົາເດັກໄປເປັນລູກລ້ຽງ ຂອງພົນລະເມືອງຕ່າງປະເທດ;
11. ການພິຈາລະນາ ຕົກລົງ ໃຫ້ຄົນຕ່າງປະເທດ ເປັນພົນລະເມືອງກິດຕິມະສັກ;
12. ການພິຈາລະນາການໃຫ້ອະໄພຍະໂທດເພື່ອສະເໜີປະທານປະເທດ;
13. ບັນຫາ ທີ່ຈຳເປັນ ແລະ ຮີບດ່ວນ ຂອງຂະແໜງການ ຫຼື ທ້ອງຖິ່ນ ສະເໜີຕໍ່ນາຍົກລັດຖະມົນຕີ ທີ່ພົວພັນເຖິງຜົນປະໂຫຍດອັນໃຫຍ່ຫຼວງ ຂອງຊາດ ຫຼື ຂອງປະຊາຊົນ;
14. ການຕ່າງປະເທດ, ການພົວພັນ ແລະ ຮ່ວມມື, ການເຊື່ອມໂຍງກັບສາກົນ ແລະ ພາກພື້ນ ທີ່ເປັນບັນຫາໃໝ່ສຳຄັນ ຊຶ່ງຮຽກຮ້ອງໃຫ້ມີການຕົກລົງເປັນເອກະພາບ ດ້ານທັດສະນະ ຫຼື ການອອກສຽງຕ່າງໆ;
15. ບົດສະຫຼຸບ ການເຄື່ອນໄຫວວຽກງານ ຂອງລັດຖະບານ;
16. ບົດລາຍງານ ຕໍ່ ສະພາແຫ່ງຊາດ ແລະ ປະທານປະເທດ;
17. ເນື້ອໃນອື່ນ ທີ່ສຳຄັນ ແລະ ຈຳເປັນ.

## ໝວດທີ 7
## ລະບອບວິທີເຮັດວຽກຂອງລັດຖະບານ

**ມາດຕາ 26 (ປັບປຸງ) ວິທີເຮັດວຽກຂອງລັດຖະບານ**

- ລັດຖະບານ ເຄື່ອນໄຫວວຽກງານ ຕາມຫຼັກການລວມສູນປະຊາທິປະໄຕ ໂດຍມີການສົມທົບລະຫວ່າງ ຄວາມຮັບຜິດຊອບຂອງໝູ່ຄະນະ ກັບການຍົກສູງຄວາມຮັບຜິດຊອບຂອງບຸກຄົນ.
- ລັດຖະບານ ຖືເອົາກອງປະຊຸມ ເປັນວິທີການຕົ້ນຕໍ ໃນການເຄື່ອນໄຫວວຽກງານຂອງຕົນ ແລະ ໃຫ້ຄວາມສຳຄັນໃນການລົງທ້ອງຖິ່ນຮາກຖານ ເພື່ອຕິດຕາມ, ກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານ ຂອງລັດຖະບານ.

**ມາດຕາ 27 (ປັບປຸງ) ການເຄື່ອນໄຫວວຽກງານຂອງສະມາຊິກລັດຖະບານ**

- ສະມາຊິກລັດຖະບານ ເຄື່ອນໄຫວວຽກງານ ດ້ວຍຄວາມຮັບຜິດຊອບສູງ ໂດຍເຄົາລົບ ພາລະບົດ ບາດ, ໜ້າທີ່ ຂອງກັນ ແລະ ປະສານສົມທົບກັນຢ່າງກົມກຽວ ແລະ ເປັນເອກະພາບກັນ.
- ໃນກໍລະນີ ມີບັນຫາບໍ່ເປັນເອກະພາບ ລະຫວ່າງ ສະມາຊິກລັດຖະບານດ້ວຍກັນນັ້ນ ໃຫ້ນຳສະເໜີບັນຫາດັ່ງກ່າວ ຕໍ່ ນາຍົກລັດຖະມົນຕີ ຫຼື ຮອງນາຍົກລັດຖະມົນຕີ ຜູ້ຊີ້ນຳຂົງເຂດວຽກງານ ເພື່ອພິຈາລະນາ ແລະ ແກ້ໄຂ.
- ໃນການເຄື່ອນໄຫວວຽກງານຕ່າງປະເທດນັ້ນ ສະມາຊິກລັດຖະບານຕ້ອງຂໍຄວາມເຫັນຈາກນາຍົກລັດຖະມົນຕີ.

**ມາດຕາ 28 ການພົວພັນກັບສະພາແຫ່ງຊາດ**

ລັດຖະບານ ຕ້ອງອະທິບາຍ, ຕອບຂໍ້ຂ້ອງໃຈ ແລະ ການຊັກຖາມ ຂອງສະມາຊິກສະພາແຫ່ງຊາດ ກ່ຽວກັບການປະຕິບັດໜ້າທີ່ ຂອງລັດຖະບານ ຫຼື ຂອງສະມາຊິກລັດຖະບານ, ສະໜອງຂໍ້ມູນຕ່າງໆ ຕາມຄຳສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ. ໃນການພົວພັນວຽກງານກັບຕ່າງປະເທດ ຫຼື ວຽກງານ ຢູ່ພາຍໃນປະເທດ ທີ່ສຳຄັນນັ້ນ ຕ້ອງຂໍຄວາມເຫັນດີຈາກສະພາແຫ່ງຊາດເສຍກ່ອນ. ຖ້າຫາກໄດ້ມີການເຊັນສົນທິສັນຍາ ທີ່ຕ້ອງໃຫ້ສັນຕະຍາບັນ ຕ້ອງນຳສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາຕົກລົງ.

ນອກຈາກນັ້ນ, ລັດຖະບານ ຍັງຕ້ອງພົວພັນກັບ ສະພາແຫ່ງຊາດ ໃນການສ້າງ ແລະ ປັບປຸງກົດໝາຍ ຕາມເນື້ອໃນ, ວິທີການ ແລະ ຂັ້ນຕອນ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສ້າງນິຕິກຳ.

**ມາດຕາ 29 ການພົວພັນກັບປະທານປະເທດ**

- ລັດຖະບານ ຕ້ອງລາຍງານການເຄື່ອນໄຫວວຽກງານຂອງຕົນ ຕໍ່ປະທານປະເທດ ໃນແຕ່ລະໄລຍະ.
- ປະທານປະເທດ ເປັນຜູ້ຮຽກໂຮມ ແລະ ເປັນປະທານກອງປະຊຸມພິເສດຂອງລັດຖະບານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ຂອງກົດໝາຍສະບັບນີ້.

**ມາດຕາ 30 (ປັບປຸງ) ການພົວພັນກັບສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ**

ລັດຖະບານ ປະສານສົມທົບກັບ ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ໃນການຕິດຕາມ ກວດກາ, ຊຸກຍູ້ ການປະຕິບັດຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ທີ່ມີຄວາມຫຍຸ້ງຍາກ ລວມທັງ ການບັງຄັບໃຊ້, ຕິດຕາມ ກວດກາ ການປະຕິບັດກົດໝາຍ, ການຕ້ານ ແລະ ສະກັດກັ້ນປາກົດການຫຍໍ້ທໍ້ຕ່າງໆ.

**ມາດຕາ 31 (ໃໝ່) ການພົວພັນກັບອົງການກວດສອບແຫ່ງລັດ ແລະ ອົງການກວດກາແຫ່ງລັດ**

- ລັດຖະບານ ປະສານສົມທົບກັບ ອົງການກວດສອບແຫ່ງລັດ ແລະ ອົງການກວດກາແຫ່ງລັດ ໃນການ ດຳເນີນການ ຕິດຕາມ ກວດສອບ ແລະ ກວດກາການຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ, ການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ການເງິນ ແລະ ງົບປະມານແຫ່ງລັດ ພ້ອມທັງຕ້ານ ແລະ ສະກັດກັ້ນປາກົດການຫຍໍ້ທໍ້ຕ່າງໆ.
- ໃນກໍລະນີຈຳເປັນ ລັດຖະບານ ອາດເຊີນ ປະທານອົງການກວດສອບແຫ່ງລັດ ແລະ ປະທານອົງການກວດກາແຫ່ງລັດ ເຂົ້າຮ່ວມກອງປະຊຸມລັດຖະບານ ກໍໄດ້.

**ມາດຕາ 32 (ປັບປຸງ) ການພົວພັນກັບ ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ**

- ເພື່ອຮັບປະກັນໃຫ້ການເຄື່ອນໄຫວວຽກງານ ມີປະສິດທິຜົນນັ້ນ ລັດຖະບານ ຕ້ອງປະສານສົມທົບກັບ ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ ເພື່ອປຶກສາຫາລື, ແລກປ່ຽນຄຳເຫັນ, ປຸກລະດົມ, ຊຸກຍູ້ ໃຫ້ອົງການຈັດຕັ້ງດັ່ງກ່າວ ເຂົ້າຮ່ວມໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມພ້ອມທັງສ້າງເງື່ອນໄຂໃຫ້ອົງການຈັດຕັ້ງດັ່ງກ່າວ ໄດ້ເຄື່ອນໄຫວວຽກງານຕາມພາລະບົດບາດ ຂອງຕົນ.
- ໃນກໍລະນີຈຳເປັນ ອາດເຊີນຜູ້ຕາງໜ້າ ຂອງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ ເຂົ້າຮ່ວມກອງປະຊຸມລັດຖະບານ ກໍໄດ້.

**ມາດຕາ 33 ການພົວພັນກັບອົງການປົກຄອງທ້ອງຖິ່ນ**

ລັດຖະບານ ແມ່ນ ອົງການຈັດຕັ້ງຂັ້ນເທິງໂດຍກົງ ຂອງອົງການປົກຄອງທ້ອງຖິ່ນ ໂດຍມີການພົວພັນ ປະສານສົມທົບ ຊຶ່ງກັນແລະກັນ ກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ ໃນການຕົກລົງຕັດສິນບັນຫາ ກ່ຽວກັບ ການສ້າງ ແລະ ຈັດຕັ້ງປະຕິບັດແຜນການ, ງົບປະມານແຫ່ງລັດ, ການຄຸ້ມຄອງພະນັກງານ-ລັດຖະກອນ, ການພົວພັນກັບຕ່າງປະເທດ ແລະ ວຽກງານອື່ນ ຢ່າງກົມກຽວ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ.

**ມາດຕາ 34 ການພົວພັນກັບຕ່າງປະເທດ**

- ລັດຖະບານ ປະຕິບັດນະໂຍບາຍການຕ່າງປະເທດ ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມື; ຂະຫຍາຍສາຍພົວພັນ ແລະ ການຮ່ວມມືກັບທຸກປະເທດ ບົນຫຼັກການຢູ່ຮ່ວມກັນໂດຍສັນຕິ, ເຄົາລົບເອກະລາດ, ອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນຂອງກັນ, ບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນ, ສະເໝີພາບ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.
- ລັດຖະບານ ສະໜັບສະໜູນການຕໍ່ສູ້ ຂອງປະຊາຊົນໃນໂລກ ເພື່ອສັນຕິພາບ ເອກະລາດແຫ່ງຊາດ, ປະຊາ ທິປະໄຕ ແລະ ຄວາມກ້າວໜ້າທາງສັງຄົມ.

**ມາດຕາ 35 ການພິຈາລະນາແກ້ໄຂຄຳສະເໜີ ຂອງປະຊາຊົນ**

ລັດຖະບານ ຮັບພິຈາລະນາ, ແກ້ໄຂຄຳສະເໜີ ຂອງປະຊາຊົນ ກ່ຽວກັບການກະທຳ ຫຼື ການຕົກລົງໃດໜຶ່ງ ຂອງການຈັດຕັ້ງບໍລິຫານລັດ ຫຼື ພະນັກງານ-ລັດຖະກອນ ທີ່ເຫັນວ່າເປັນການລະເມີດ ກົດໝາຍ, ລະບຽບການ ແລະ ແຕະຕ້ອງເຖິງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 36 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 37 (ປັບປຸງ) ຜົນສັກສິດ**

- ກົດໝາຍສະບັບນີ້ ມີຜົນສັກສິດພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.
- ກົດໝາຍສະບັບນີ້ ປ່ຽນແທນ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016.
- ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**




**ກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ (ສະບັບປັບປຸງ)**

**ຄັດໂດຍ: ກົງທະນຸຄຳ ພິພັດເສລີ**

19. ຫລັກຖານແກ້ມັດ ໝາຍເຖິງ ຫລັກຖານທີ່ຢັ້ງຢືນວ່າ ຜູ້ຖືກຫາ ຫລື ຈຳເລີຍ ບໍ່ໄດ້ກະທຳຜິດ;

20. ການຊັນນະສູດ ໝາຍເຖິງ ການກວດກາ, ເກັບກຳ, ທ້ອນໂຮມຂໍ້ມູນຫລັກຖານ, ຮ່ອງຮອຍຂອງການ

# ເຄັນຢາ ປະກາດຜົນການເລືອກປະທານາທິບໍດີ

ແປ ແລະ ຮຽບຮຽງ: ນາກ ເມືອງມະໂນ




ອີງຕາມການລາຍງານຂ່າວໃຫ້ຮູ້ວ່າ: ໃນວັນທີ 15 ສິງຫານີ້, ຄະນະກຳມະການການເລືອກຕັ້ງຢ່າງເປັນເອກະລາດ ແລະ ວຽກງານຊາຍແດນຂອງເຄັນຢາ ໄດ້ປະກາດຜົນການປ່ອນບັດເລືອກຕັ້ງປະທານາທິບໍດີ ວ່າ: ທ່ານ ວິລຽມ ຣູໂຕ ຜູ້ສະໝັກຮັບເລືອກຕັ້ງຂອງພັກສະຫະພັນປະຊາທິປະໄຕຮ່ວມ, ຮອງປະທານາທິບໍດີຄົນປັດຈຸບັນ ໄດ້ຮັບໄຊຊະນະໃນການເລືອກຕັ້ງປະທານາທິບໍດີທີ່ຈັດຂຶ້ນໃນວັນທີ 9 ສິງຫາ 2022.

ສຳລັບຜົນການນັບບັດ, ທ່ານ ວິລຽມ ຣູໂຕ ໄດ້ຮັບຄະແນນຫລາຍກວ່າ 7.170.000 ບັດ ໃນການເລືອກຕັ້ງປະທານາທິບໍດີຄັ້ງດັ່ງກ່າວ ແລະ ທ່ານ ໄຣລາ ໂອດິນກາ ຜູ້ສະໝັກຮັບເລືອກຕັ້ງອີກຄົນໜຶ່ງ ເຊິ່ງເປັນອະດີດນາຍົກລັດຖະມົນຕີເຄັນຢາ ໄດ້ຮັບ 6.940.000 ກວ່າບັດ.

ທ່ານ ວິລຽມ ຣູໂຕ ໄດ້ດຳລົງຕຳແໜ່ງລັດຖະມົນຕີກະຊວງກະສິກຳມາແຕ່ປີ 2008, ໃນປີ 2010 ດຳລົງຕຳແໜ່ງລັດຖະມົນຕີກະຊວງການສຶກສາຊັ້ນສູງ, ນັບແຕ່ປີ 2013 ໄດ້ດຳລົງຕຳແໜ່ງເປັນຮອງປະທານາທິບໍດີເຄັນຢາຈົນຮອດປັດຈຸບັນນີ້.

**ແຫລ່ງຂ່າວ: CRI**

ທະນາຄານພັດທະນາລາວ LDB Bank

ທະນາຄານພົງສະຫວັນ Phongsavanh BANK







# ປະເທດໃນພາກພື້ນ ລວມທັງປະເທດຈີນ ແລະ ລາວ ຕ້ອງເຂົ້າຮ່ວມອະນຸລັກຊ້າງອາຊີ

ແປ ແລະ ຮຽບຮຽງ: ນາກ ເມືອງມະໂນ

ໃນວັນທີ 16 ສິງຫາ 2022 ໄດ້ມີການລາຍງານຂ່າວໃຫ້ຮູ້ວ່າ: ວັນຊ້າງໂລກ ຄັ້ງທີ 11 ແມ່ນວັນທີ 12 ສິງຫາ 2022, ຊ້າງອາຊີເຄີຍແຈກຢາຍຢູ່ເຂດອາຊີຢ່າງກວ້າງຂວາງ, ແຕ່ຍ້ອນສາເຫດຕ່າງໆ ເຊັ່ນ ການຈັບຊ້າງຢ່າງຜິດກົດໝາຍ, ການທຳຮ້າຍໂດຍບັງເອີນ ແລະ ອັດຕາການຈະເລີນພັນຫລຸດລົງຫລັງຖືກຄົນເຝິກແອບລ້ຽງ ແລະ ສາເຫດອື່ນໆ ເຊິ່ງຈຳນວນຊ້າງອາຊີໄດ້ຫລຸດລົງໃນແຕ່ລະປີ. ມາຮອດປັດຈຸບັນ, ພຽງແຕ່ທີ່ຢູ່ອາໄສກໍຍັງມີຂອບເຂດຈຳກັດ, ຕົ້ນຕໍໄດ້ແຈກຢາຍຢູ່ພາກສ່ວນໃດໜຶ່ງຂອງແຂວງຢຸນນານປະເທດຈີນແລະບາງປະເທດໃນອາຊີຕາເວັນອອກສຽງໃຕ້ ເຊັ່ນ ປະເທດລາວ, ມຽນມາ ແລະ ອື່ນໆ ໂດຍອີງຕາມຜົນສະຖິຕິເມື່ອປີ 2019, ໃນໄລຍະ 60-75 ປີຜ່ານມາ, ຈຳນວນຊ້າງປ່າອາຊີໄດ້ຫລຸດລົງປະມານເຄິ່ງໜຶ່ງ.

ຢູ່ປະເທດຈີນ ຖືວ່າ ຊ້າງອາຊີແມ່ນສັດປ່າຫວງຫ້າມລະດັບຊາດຂັ້ນໜຶ່ງ ແລະ ຢູ່ປະເທດລາວ ຖືວ່າ ຊ້າງອາຊີກໍແມ່ນສັດປ່າຫວງຫ້າມທີ່ສຳຄັນເຊັ່ນກັນ. ໃນຫລາຍປີມາ, ພາຍໃຕ້ສະຖານະການທີ່ຍອດຈຳນວນຊ້າງອາຊີຂອງໂລກໄດ້ຫລຸດລົງເລື້ອຍໆ, ຈຳນວນຊ້າງອາຊີຢູ່ປະເທດຈີນຜັດໄດ້ເພີ່ມຂຶ້ນ ໂດຍຈາກ 146 ໂຕເມື່ອປີ 1976 ໄດ້ເພີ່ມຂຶ້ນເປັນປະມານ 360 ໂຕໃນປັດຈຸບັນ.

ການໄດ້ຮັບຜົນດັ່ງກ່າວ, ນອກຈາກຈີນໄດ້ປະຕິບັດມາດຕະການປົກປ້ອງທີ່ມີປະສິດທິຜົນແລ້ວຍັງໄດ້ຮັບຜົນມາຈາກປະເທດລາວ ແລະ ປະເທດອື່ນໆເຂົ້າຮ່ວມການອະນຸລັກຮ່ວມກັນ. ໃນຫລາຍປີມານີ້, ປະເທດຈີນ ແລະ ປະເທດລາວ ໄດ້ເອົາໃຈໃສ່ຕໍ່ການປົກປັກຮັກສາຊ້າງອາຊີ ແລະ ທີ່ຢູ່ອາໄສຂອງມັນໂດຍຕະຫລອດ. ເລີ່ມແຕ່ປີ 2006, ເຂດສະຫງວນທຳມະຊາດສິບສອງພັນນາ ເຊິ່ງເປັນເຂດສະຫງວນທຳມະຊາດຂອງຈີນລະດັບຊາດ ໄດ້ຮ່ວມມືກັບພາກສ່ວນກະສິກຳ ແລະ ປ່າໄມ້ຂອງ 3 ແຂວງພາກເໜືອຂອງປະເທດລາວ, ດຳເນີນການຕິດຕາມແລະການປົກປ້ອງຂ້າມຊາດ, ແລະ ໄດ້ສ້າງຕັ້ງເຂດອະນຸລັກຊີວະນາໆພັນປະສົມຂ້າມຊາດຈີນ-ລາວ. ປີ 2012, ຈີນ ແລະ ລາວ ໄດ້ເຊັນສັນຍາເຂດອະນຸລັກປະສົມ, ເຂດອະນຸລັກຊີວະນາໆພັນຂ້າມຊາດໄດ້ເຊື່ອມຕໍ່ກັນທັງໝົດ.

ໃນຊຸມປີຜ່ານມາ, ສອງປະເທດຈີນ ແລະ ລາວ ເຮັດວຽກຮ່ວມກັນ, ນຳໃຊ້ກ້ອງຖ່າຍຮູບອິນຟາເຣດຕິດຕາມການເຄື່ອນໄຫວຂ້າມຊາດຂອງຊ້າງອາຊີ ແລະ ສັດປ່າອື່ນໆທີ່ຫາຍາກ. ພ້ອມກັນນັ້ນ, ຈີນໄດ້ແບ່ງປັນບົດຮຽນໃນດ້ານການອະນຸລັກຊ້າງອາຊີ ແລະ ສັດປ່າອື່ນໆກັບປະເທດລາວ ແລະ ປະເທດອື່ນໆ, ໃຫ້ການສະໜັບສະໜູນຢ່າງແທ້ຈິງແກ່ບຸກຄະລາກອນຂອງປະເທດລາວ ແລະ ປະເທດອື່ນໆ ໃຫ້ມາຍົກລະດັບຢູ່ປະເທດຈີນ.

ໃນຫລາຍປີມານີ້, ການອະນຸລັກຊ້າງອາຊີຮ່ວມກັນລະຫວ່າງຈີນກັບລາວ ໄດ້ກາຍເປັນການຮ່ວມມືລະດັບຊາດລະຫວ່າງສອງປະເທດ, ໄດ້ສ້າງຮົ້ວປ້ອງກັນຄວາມປອດໄພດ້ານສິ່ງແວດລ້ອມທຳມະຊາດເພື່ອອະນຸລັກຊ້າງອາຊີ ແລະ ຊີວະນາໆພັນຢູ່ເຂດຊາຍແດນ. ຕົວຢ່າງວ່າ, ການປະຕິບັດໂຄງການ “ຈຸດທົດລອງບ້ານແບບຢ່າງຊີວະພາບຂອງບ້ານຊົນເຜົ່າສ່ວນໜ້ອຍທຸກຍາກຢູ່ເຂດອະນຸລັກຊ້າງອາຊີຂ້າມຊາດຂອງປະເທດລາວ” ຢ່າງສະດວກ, ໃນເວລາທີ່ປັບປຸງເງື່ອນໄຂການດຳລົງຊີວິດຂອງຊາວບ້ານດັ່ງກ່າວໃຫ້ດີຂຶ້ນ, ກໍໄດ້ປົກປ້ອງຊັບພະຍາກອນປ່າໄມ້ ແລະ ທີ່ຢູ່ອາໄສຂອງຊ້າງອາຊີຢູ່ເຂດຊາຍແດນລະຫວ່າງຈີນ-ລາວ, ໄດ້ຊຸກຍູ້ວຽກງານອະນຸລັກຊີວະນາໆພັນຂ້າມຊາດລະຫວ່າງຈີນກັບລາວຕື່ມອີກ.

ອີກປະການໜຶ່ງ: ໃນຂະບວນການກໍ່ສ້າງທາງລົດໄຟລາວ-ຈີນ, ກໍໄດ້ພິຈາລະນາເຖິງປັດໄຈຊ້າງອາຊີຢ່າງສົມບູນ ໃນເວລາສ້າງສະຖານີລົດໄຟຮ່ອມພູຊ້າງປ່າຂອງທາງລົດໄຟລາວ-ຈີນ ກໍໄດ້ຫລີກເວັ້ນເຂດການເຄື່ອນໄຫວຕົ້ນຕໍຂອງຊ້າງອາຊີ. ນອກນັ້ນ, ຍັງໄດ້ສ້າງຊ່ອງທາງ ແລະ ຂົວສະເພາະໃຫ້ແກ່ຊ້າງປ່າອາຊີອີກ.

ຊີວະນາໆພັນແມ່ນພື້ນຖານການດຳລົງຄົງຕົວ ແລະ ການພັດທະນາຂອງມະນຸດ, ແມ່ນສາຍເລືອດ ແລະ ກົກເຄົ້າຂອງປະຊາຄົມຮ່ວມຊາຕາກຳຊີວິດຂອງໂລກ. ປະເທດຈີນ, ປະເທດລາວແລະປະເທດຕ່າງໆໃນໂລກຄວນຕັ້ງໜ້າເຂົ້າຮ່ວມໃນການຮ່ວມກັນປົກປັກຮັກສາຊ້າງອາຊີ ແລະ ສັດຫາຍາກຕ່າງໆ, ຮ່ວມກັນສ້າງບ້ານສວຍງາມທີ່ທຸກສິ່ງຢູ່ນຳກັນຢ່າງກົມກຽວ.






**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຫົວໜ້າບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ
ທ່ານ ຂັນທະວີ ວົງພະຈັນ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອຳພັນ
ທ່ານ ນາງ ສຸພາວັນ ຫອມສະນິດ
ທ່ານ ນາງ ປາກາລັກ ພົມມີໄຊ

**ອອກແບບຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ